# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລາມຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມີນາ 2025
ປີທີ 14
ສະບັບທີ 1009
ລາຍສັປະດາ


## ຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝວິສາມັນເທື່ອທີ 2

(ສພຊ)-ວັນທີ 14-15 ມີນາຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານກ່າວເປີດຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຮອງປະທານສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ), ບັນດາ




ທ່ານຕາງໜ້າໃຫ້ລັດຖະບານ ແລະ ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນວັນທີ 14 ມີນາ ໄດ້ມີການຮັບຟັງລາຍງານກ່ຽວກັບການປັບປຸງລັດຖະທຳມະນູນສະບັບປີ2025, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ (ສະບັບປັບປຸງ) ໂດຍແມ່ນບັນດາທ່ານຮອງປະທານສະພາແຫ່ງຊາດໄດ້ຜັດປ່ຽນກັນຊີ້ນຳ ແລະ ເປັນປະທານກອງປະຊຸມ.

ວັນທີ 15 ມີນາ 2025 ກອງປະຊຸມໄດ້ສືບຕໍ່ປະກອບຄຳ

ອ່ານຕໍ່ໜ້າ 4

## ສະພາແຫ່ງຊາດລາວ ເປັນເຈົ້າພາບກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາ APF



(ສພຊ) - ໃນວັນທີ 12 ມີນາ2025, ກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາ ຂອງສະມັດຊາລັດຖະສະພາຝຣັ່ງໂກໂຟນີ (APF) ໄດ້ໄຂຂຶ້ນຢ່າງເປັນທາງການ ທີ່ນະຄອນຫຼວງວຽງຈັນ, ສປປລາວ; ກອງປະຊຸມດັ່ງກ່າວ, ແມ່ນກົນ

ອ່ານຕໍ່ໜ້າ 4




3. ແນວຄິດຊີ້ນຳຂອງປະທານ ໄກສອນ ພົມວິຫານ

ການຈັດຕັ້ງກົງຈັກລັດຂອງພວກເຮົາ ຈະຕ້ອງເຮັດແບບຮູບທາດ, ຢູ່ເທິງເບົາບາງ ແລະ ຍອດຍິ່ງ, ມີຄວາມສາມາດໃນການຄົ້ນຄວ້າ, ຊອກຫາແນວທາງ, ແຜນນະໂຍບາຍ. (ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 501).

4. ແນວຄິດປະທານ ໄກສອນ ພົມວິຫານ ຕໍ່ການສຶກສາ

ການປະຕິວັດໃນດ້ານການສຶກສາ ແມ່ນພາລະກິດຂອງມະຫາຊົນນັບເປັນລ້ານໆຄົນ ພວກເຮົາຈະເຂົ້າໃຈໄປແນວອື່ນບໍ່ໄດ້ ຖ້າພວກເຮົາຫາກເຮັດເອົາເອງໂດຍບໍ່ອີງໃສ່ມະຫາຊົນແລະຈັດຕັ້ງມະຫາຊົນເປັນຢ່າງດີແລ້ວ ເຮັດແນວໃດຈຶ່ງຈະສາມາດເອົາການສຶກສາໄປກ່ອນກ້າວໜຶ່ງໄດ້ (ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 27).

ອ່ານຕໍ່ສະບັບໜ້າ

## ຮອງປະທານສະພາແຫ່ງຊາດ ກ່າວປາໄສໃນພິທີເປີດກອງປະຊຸມ CAP ຂອງ APF




(ສພຊ) - ວັນທີ 12 ມີນາຜ່ານມາ ທີ່ໂຮງແຮມ ຣໍລີເດ ອິນ ນະຄອນຫຼວງວຽງຈັນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມພິທີເປີດກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (La Réunion de la Commission des Affaires Parlementaire de l'APF (CAP)) ແລະ ໄດ້ມີການກ່າວຄຳປາໄສ

ອ່ານຕໍ່ໜ້າ 9

## ສພຊ ເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ III

(ສພຊ) - ຕອນເຊົ້າວັນທີ 11 ມີນາຜ່ານມາ ທີ່ສະພາແຫ່ງຊາດ(ສພຊ) ໄດ້ມີພິທີເປີດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ III ໃຫ້ແກ່ສະມາຊິກພັກ-ພະນັກງານພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ມີສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ກຳມະການປະຈຳຄະນະບໍລິຫານງານພັກສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ, ສະຫາຍ ນາງ ບຸນມີ ຈຸນລະຈັກ ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ), ບັນດາສະຫາຍໃນຄະນະປະຈຳ ແລະ ຮອງປະທານກຳມາທິການ ທີ່ຕາງໜ້າຮາກຖານພັກທົ່ວອົງຄະນະພັກ ສພຊ, ບັນ



ດາຄູ-ອາຈານຈາກສມປຊແລະສຳມະນາກອນ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງການເປີດຊຸດຮຽນນີ້ ແມ່ນເພື່ອຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ ໃຫ້ບັນດາສະຫາຍສະມາຊິກພັກ-ພະນັກງານຫຼັກແຫຼ່ງພາຍໃນສະພາແຫ່ງຊາດ ໃຫ້ສາມາດກຳແໜ້ນຫຼັກມູນທິດສະດີມາກ-ເລນິນ, ແນວທາງປ່ຽນແປງໃໝ່ຂອງພັກໃນແຕ່ລະໄລຍະ ແລະ ແນວຄິດຂອງປະທານ ໄກສອນ ພົມວິຫານ; ໃຫ້ບັນດາສະຫາຍສະມາຊິກພັກໜຸ່ມນ້ອຍ ມີຄວາມຮູ້ພື້ນຖານທາງດ້ານທິດສະດີ, ສາມາດໝູນໃຊ້ທິດສະດີດັ່ງກ່າວເຂົ້າໃນການປະຕິບັດໜ້າທີ່ການເມືອງ, ວຽກງານຕົວຈິງທີ່ຕົນເອງຮັບຜິດຊອບຢ່າງມີປະສິດທິພາບ ແລະ ປະສິດທິຜົນ ທັງເປັນການບຳລຸງສ້າງສະມາຊິກພັກ-ພະນັກງານ ໃຫ້ມີທັດສະນະຫຼັກໝັ້ນການເມືອງ ແລະ ຫຼັກໝັ້ນຊົນຊັ້ນທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີແນວຄິດອຸ່ນອຽນທຸ່ນທ່ຽງ, ມີຄວາມບຸກບືນ

ອ່ານຕໍ່ໜ້າ 9

## ກອງປະຊຸມສະໄໝວິສາມັນເທື່ອທີ 2 ຈະໄຂຂຶ້ນໃນວັນທີ 17 ມີນານີ້



(ສພຊ)-ຕອນບ່າຍວັນທີ 11 ມີນານີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານ

ອ່ານຕໍ່ໜ້າ 4



ເອົາບຸນບັງໜ້າ ... (ໜ້າ 9)



ສະພານິຕິບັດຍັດ... (ໜ້າ 11)




ເບິ່ງລະດັບໂທດ ... (ໜ້າ 12)

ຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ (22/3/1955-22/3/2025) ຢ່າງສຸດໃຈ!

# ຖາມ-ຕອບ ກ່ຽວກັບການປັບປຸງລັດຖະທຳມະນູນ




ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການ ແລະ ຫົວໜ້າກອງເລຂາ ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ສົນທະນາກັບສື່ມວນຊົນ ໃນຄັ້ງວັນທີ 4 ກຸມພາ 2025 ກ່ຽວກັບການປັບປຸງລັດຖະທຳມະນູນ ເຊິ່ງໄດ້ອອກອາກາດທາງໂທລະພາບ, ສື່ອອນລາຍ, ວິທະຍຸ ທັງເປັນພາບອອນລາຍ ແລະ ກະຈາຍສຽງພ້ອມ; ກອງບັນນາທິການໜັງສືພິມ "ຜູ້ແທນປະຊາຊົນ" ກະບອກສຽງຂອງສະພາແຫ່ງຊາດ ໄດ້ຄັດເລືອກ 4 ຄຳຖາມ-ຄຳຕອບ ມາເຜີຍແຜ່ຕໍ່ຜູ້ອ່ານ ດັ່ງລຸ່ມນີ້:

ຄຳຖາມ: ເປັນຫຍັງຈຶ່ງມີການປັບປຸງລັດຖະທຳມະນູນຄັ້ງນີ້?

ຕອບ: ລັດຖະທຳມະນູນສະບັບປີ 2015 ທີ່ໄດ້ຮັບຮອງເອົາໂດຍກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 012/ສພຊ, ລົງວັນທີ 08 ທັນວາ 2015 ແລະ ຖືກປະກາດໃຊ້ດ້ວຍລັດຖະດຳລັດຂອງປະທານປະເທດເລກທີ214/ປປທ, ລົງວັນທີ 15 ທັນວາ 2015 ເຊິ່ງເປັນລັດຖະທຳມະນູນຂອງລະບອບປະຊາທິປະໄຕປະຊາຊົນລາວ ທີ່ໄດ້ມີການປັບປຸງເປັນເທື່ອທີ 2 ແລະຜ່ານການຈັດຕັ້ງປະຕິບັດມາເປັນເວລາ 10 ປີ (2015-2025), ເຊິ່ງເນື້ອໃນພື້ນຖານຂອງລັດຖະທຳມະນູນສະບັບນີ້ແມ່ນຍັງຖືກຕ້ອງ, ສອດຄ່ອງ ແລະ ໄດ້ກາຍເປັນເຄື່ອງມືພື້ນຖານ ກໍຄືນິຕິກຳສູງສຸດຂອງລັດແຫ່ງສປປລາວ ໃນການປົກປັກຮັກສາ ແລະ ຄຸ້ມຄອງການບໍລິຫານສ້າງສາປະເທດຊາດ ເຮັດໃຫ້ປະເທດຂອງພວກເຮົາໄດ້ມີສະຖຽນລະພາບການເມືອງຢ່າງໝັ້ນຄົງຕະຫຼອດມາ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດ-ວັດທະນະທຳໄດ້ຮັບການສ້າງສາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສິດເປັນເຈົ້າປະເທດຊາດ, ສິດ ແລະ ປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການເສີມຂະຫຍາຍ ແລະ ປົກປ້ອງດ້ວຍລັດຖະທຳມະນູນ ແລະ ກົດໝາຍ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ນັບມື້ນັບນຳເອົາຜົນປະໂຫຍດທີ່ສຳຄັນ, ໃຫຍ່ຫຼວງ ມາໃຫ້ແກ່ການສ້າງສາປະເທດຊາດ; ແຕ່ພ້ອມດຽວກັນນັ້ນ, ມີບາງຂໍ້ກຳນົດໃນໝວດວ່າດ້ວຍການປົກຄອງທ້ອງຖິ່ນ ແລະ ໝວດອື່ນຂອງລັດຖະທຳມະນູນ ແມ່ນບໍ່ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນໄລຍະໃໝ່.

ອີກປະການໜຶ່ງ, ສູນກາງພັກປະຊາຊົນປະຕິວັດລາວ ໄດ້ອອກມະຕິເລກທີ05/ຄບສພ, ລົງວັນທີ 05 ກັນຍາ 2023 ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງແລະຮອບດ້ານ ໃນການນຳພາຂອງພັກ; ກົມການເມືອງສູນກາງພັກໄດ້ອອກມະຕິເລກທີ04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່; ຄະນະເລຂາທິການສູນກາງພັກ ໄດ້ອອກຄຳສັ່ງ ເລກທີ 173/ຄລສພ, ລົງວັນທີ 05 ກໍລະກົດ 2024 ວ່າດ້ວຍການຄາດຄະເນແບ່ງຄວາມຮັບຜິດຊອບຂອງຄະນະປະຈຳພັກແຕ່ລະຂັ້ນ. ສະນັ້ນ, ຈຶ່ງມີຄວາມຈຳເປັນເລັ່ງທວງໃຫ້ມີການປັບປຸງລັດຖະທຳມະນູນ ສະບັບປີ2015 ໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກແລະການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນໄລຍະໃໝ່ນີ້.

**ຄຳຖາມ:** ການປັບປຸງລັດຖະທຳມະນູນຄັ້ງນີ້ ມີຄວາມໝາຍສຳຄັນແນວໃດແດ່?

**ຕອບ:** ລັດຖະທຳມະນູນ ແມ່ນນິຕິກຳສູງສຸດຂອງລັດ ສປປລາວແລະທັງເປັນກົດໝາຍພື້ນຖານຂອງຊາດ ລາວ ເຊິ່ງກຳນົດບັນຫາທີ່ເປັນຫຼັກການໃຫຍ່ໆ ກ່ຽວກັບລະບອບການເມືອງ, ລະບອບເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສິດ ແລະພັນທະພື້ນຖານຂອງພົນລະເມືອງລາວ, ການຈັດຕັ້ງກົງຈັກແຫ່ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ກໍຄືການກຳນົດບັນຫາສຳຄັນພື້ນຖານອື່ນໆ. ສະນັ້ນ, ການປັບປຸງລັດຖະທຳມະນູນແຕ່ລະຄັ້ງ ຈຶ່ງມີຄວາມໝາຍສຳຄັນທີ່ສຸດ ເຊິ່ງເປັນຂີດໝາຍໃໝ່ໃນການເຕີບໃຫຍ່ເຂັ້ມແຂງຂອງລັດປະຊາທິປະໄຕປະຊາຊົນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ເປັນຂີດໝາຍໃໝ່ໃນການສ້າງລັດປະຊາທິປະໄຕປະຊາຊົນລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ.

ສະນັ້ນ, ການປັບປຸງລັດຖະທຳມະນູນແຕ່ລະຄັ້ງ ຈຶ່ງຕ້ອງຮັບປະກັນຄວາມໝັ້ນຄົງຂອງລະບອບການເມືອງ ກໍຄືຄວາມເປັນເອກະລາດ, ອຳນາດອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດ; ຮັບປະກັນການຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ ເປັນຂໍ້ກຳນົດຂອງນິຕິກຳສູງສຸດ, ຮັບປະກັນການເພີ່ມທະວີບົດບາດນຳພາຂອງພັກປະຊາຊົນປະຕິວັດລາວ, ຮັບປະກັນການສ້າງຄວາມເຂັ້ມແຂງ ແລະ ໜັກແໜ້ນໃຫ້ແກ່ລະບົບອຳນາດລັດຂັ້ນຕ່າງໆ, ຮັບປະກັນການເສີມຂະຫຍາຍ ແລະ ປະຕິບັດສິດເປັນເຈົ້າປະເທດຊາດ, ສິດ ແລະ ປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າແລະຮັບປະກັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ບົນພື້ນຖານຄວາມເປັນເອກະລາດ, ເປັນເຈົ້າຕົນເອງຂອງຊາດ.

**ຄຳຖາມ:** ທັດສະນະຊີ້ນຳຂອງສູນກາງພັກປະຊາຊົນປະຕິວັດລາວຕໍ່ການປັບປຸງລັດຖະທຳມະນູນຄັ້ງນີ້ ມີແນວໃດແດ່?

**ຕອບ:** ຜ່ານການພິຈາລະນາຢ່າງຖີ່ຖ້ວນ ແລະ ເລິກເຊິ່ງ, ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ຄັ້ງທີ 9 ສະໄໝທີ XI ທີ່ເປີດຂຶ້ນຢູ່ນະຄອນຫຼວງວຽງຈັນ ແຕ່ວັນທີ 28 ຕຸລາ -06 ພະຈິກ 2024 ໄດ້ມີ 3 ທັດສະນະຊີ້ນຳທີ່ສຳຄັນພື້ນຖານຕໍ່ການປັບປຸງລັດຖະທຳມະນູນຄັ້ງນີ້ ຄື:

1. ແນໃສ່ການປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍຄືນິຕິກຳທີ່ຈະວາງອອກໃນຕໍ່ໜ້າ ໃຫ້ຮັບປະກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່.

2. ການປັບປຸງລັດຖະທຳມະນູນຄັ້ງນີ້ ຕົ້ນຕໍແມ່ນສຸມໃສ່ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼື ຮອງຮັບແນວທາງການເມືອງຂອງພັກ ແລະແນວທາງການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່ ກໍຄືແນວທາງປ່ຽນແປງໃໝ່ໃນຊຸມປີຕໍ່ໜ້າ, ໂດຍສະເພາະໃນສະໄໝທີXIIຂອງພັກທາກບໍ່ແມ່ນການປັບປຸງທັງໝົດເນື້ອໃນຂອງລັດຖະທຳມະນູນ; ໝາຍວ່າ ອັນໃດທີ່ເຂົ້າໃຈເປັນເອກະພາບ, ປະຕິບັດມີປະສິດທິຜົນ, ບໍ່ມີຄວາມສັບສົນ ຫຼື ເປັນບັນຫາຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ກໍບໍ່ຈຳເປັນຕ້ອງປັບປຸງຕື່ມອີກ.

3. ການປັບປຸງລັດຖະທຳມະນູນ ຕ້ອງມີເນື້ອໃນສອດຄ່ອງກັບບັນດາເນື້ອໃນຂອງໂຄງການການເມືອງຂອງພັກສະບັບທີ 3, ຮ່າງລາຍງານການເມືອງທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ ໂດຍສະເພາະບັນຫາບົດບາດພັກເປັນແກນນຳ, ບັນຫາຈຸດໝາຍສັງຄົມນິຍົມ, ບັນຫາເສດຖະກິດເອກະລາດເປັນເຈົ້າຕົນເອງ, ບັນຫາການແບ່ງຂັ້ນຄຸ້ມຄອງ, ການກຳນົດຊື່ອື່ນຕ່າງໆ ຕ້ອງປັບປຸງໄປລວງດຽວກັນ.

**ຄຳຖາມ:** ໂຄງປະກອບຂອງຮ່າງລັດຖະທຳມະນູນ ສະບັບປີ 2025 ທຽບໃສ່ສະບັບປີ 2015 ມີຫຍັງຄືກັນ ແລະແຕກຕ່າງກັນ?

**ຕອບ:** ໂຄງປະກອບຂອງລັດຖະທຳມະນູນ ສະບັບປີ2015 ມີ 14 ໝວດ ແລະ 119 ມາດຕາ, ສ່ວນໂຄງປະກອບຂອງຮ່າງລັດຖະທຳມະນູນ ສະບັບປີ2025 ກໍມີ 14 ໝວດ, ແຕ່ມີ 122 ມາດຕາ ໃນນີ້, ໄດ້ປັບປຸງ 48 ມາດຕາ, ເພີ່ມໃໝ່ 5 ມາດຕາ ແລະ ຮັກສາເນື້ອໃນໄວ້ຄືເກົ່າ 69 ມາດຕາ.

# ຄະນະສະຫະພັນໜ່ວຍແມ່ຍິງ ສຄອຊ ພົບປະແລກປ່ຽນ, ທັດສະນະສຶກສາຢ້ຽມຊົມຫໍ ສພຊ



(ສພຊ) - ວັນທີ 13 ມີນານີ້ທີ່ສະພາແຫ່ງຊາດ(ສພຊ), ຄະນະສະຫະພັນໜ່ວຍແມ່ຍິງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ພ້ອມດ້ວຍຜູ້ປະກອບການເພດຍິງທີ່ເປັນການນຳສັງກັດຢູ່ບັນດາສະມາຄົມທຸລະກິດ ໄດ້ເຄື່ອນໄຫວພົບປະ,ແລກປ່ຽນບົດຮຽນແລະທັດສະນະສຶກສາຢ້ຽມຊົມຫໍສະພາແຫ່ງຊາດ ນຳໂດຍທ່ານ ປອ. ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ປະທານຜູ້ຊີ້ນຳສະຫະພັນໜ່ວຍແມ່ຍິງ ສຄອຊ; ໃຫ້ການຕ້ອນຮັບໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ,ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ພ້ອມດ້ວຍ ສສຊ ເພດຍິງ, ຄະນະປະທານສະຫະພັນແມ່ຍິງ ສພຊ ເຊິ່ງມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມແລກປ່ຽນບົດຮຽນ.

ການພົບປະໃນຄັ້ງນີ້ເປັນຂີດໝາຍເລີ່ມຕົ້ນທີ່ສຳຄັນໃນການສົ່ງເສີມການພົວພັນ ແລະ ຮ່ວມມືອັນດີງາມ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດເພດຍິງ ກັບຄະນະສະຫະພັນໜ່ວຍແມ່ຍິງ ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ, ຜູ້ປະກອບການເພດຍິງ ແລະ ສະມາຄົມນັກທຸລະກິດຍິງ ໃຫ້ເຂົ້າສູ່ລວງເລິກ ແນໃສ່ສ້າງກົນໄກປະສານງານເພື່ອຊຸກຍູ້ສົ່ງເສີມເພດຍິງໃນຂົງເຂດອຸດສາຫະກຳ, ການຄ້າ, ຜູ້ປະກອບການເພດຍິງ, ສະມາຄົມນັກທຸລະກິດຍິງ ໄດ້ເຂົ້າມາມີສ່ວນຮ່ວມ ແລະ ມີບົດບາດໃນເວທີການເມືອງໃຫ້ນັບມື້ຫຼາຍຂຶ້ນ.

ໃນການພົບປະ ໄດ້ຮັບຟັງຄວາມເປັນມາ ແລະ ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງໂດຍຫຍໍ້ ເຊິ່ງຍົກໃຫ້ເຫັນສະພາບລວມການຈັດຕັ້ງ ແລະ ການເຄື່ອນໄຫວ ກໍຄືຜົນສຳເລັດບາງດ້ານໃນໄລຍະຜ່ານມາ; ສົນທະນາແລກປ່ຽນຄຳເຫັນ, ປະສົບການໃນການເປັນຜູ້ນຳທີ່ດີຂອງແມ່ຍິງແລະການມີສ່ວນຮ່ວມຂອງແມ່ຍິງໃນເວທີການເມືອງ ແລະ ວົງການທຸລະກິດ ລວມທັງບາງບົດຮຽນປະສົບການທີ່ຕ່າງຝ່າຍຕ່າງໃຫ້ຄວາມສົນໃຈ.

ນອກຈາກນີ້, ຄະນະສະຫະພັນໜ່ວຍແມ່ຍິງ ສຄອຊ ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອ ສພຊ ພ້ອມທັງມອບເງິນ ຈຳນວນ 5 ລ້ານກີບ ໃຫ້ແກ່ຄະນະສສຊ ເພດຍິງອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**



# ສຳເລັດກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາ APF




(ສພຊ) - ສະພາແຫ່ງຊາດແຫ່ງສປປລາວໄດ້ສຳເລັດການເປັນເຈົ້າພາບຈັດກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາ ແລະ ກອງປະຊຸມສຳມະນາໂຕະມົນ ຂອງສະມັດຊາລັດຖະສະພາຝຣັ່ງໂກໂຟນີ (APF) ທີ່ນະຄອນຫຼວງວຽງຈັນ, ສປປລາວ ເຊິ່ງຈັດຂຶ້ນໃນລະຫວ່າງວັນທີ 12-14 ມີນາ 2025; ກອງປະຊຸມໄດ້ດຳເນີນໄປພາຍໃຕ້ການເປັນປະທານຮ່ວມຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ປະທານຄະນະລັດຖະສະພາຝຣັ່ງໂກໂຟນີ ຂອງສະພາແຫ່ງຊາດລາວ ແລະ ທ່ານ ຮຸດແຊັງ ບວກຊີ ຮອງປະທານກຳມາທິການວຽກງານສະມາຊິກລັດຖະສະພາຂອງຝຣັ່ງ, ໂດຍມີຜູ້ເຂົ້າຮ່ວມຈາກປະເທດສະມາຊິກ APF ຫຼາຍກວ່າ 65 ທ່ານ ທີ່ມາຈາກ 11 ປະເທດສະມາຊິກຝຣັ່ງໂກໂຟນີ.

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນໄດ້ຮ່ວມກັນຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຂໍ້ມູນຂ່າວສານ ແລະ ຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງແລະສ້າງສັນ ຕໍ່ບົດລາຍງານກ່ຽວກັບຄວາມຮັບຜິດຊອບທາງດ້ານຈັນຍາບັນຂອງບັນດາສະມາຊິກລັດຖະສະພາ ໃນການປະເຊີນໜ້າກັບຂ່າວທີ່ບໍ່ຈິງ, ບົດລາຍງານຄວາມຄືບໜ້າຂອງແຜນການປະຕິບັດງານທີ່ດີຂອງລັດຖະສະພາໃນການສົ່ງເສີມການນຳໃຊ້ພາສາຝຣັ່ງ ແລະ ບົດລາຍງານຄວາມຄືບໜ້າຂອງການສ້າງນິຕິກຳ ເພື່ອປົກປ້ອງຜູ້ໃຫ້ເບາະແສ; ກອງປະຊຸມໄດ້ເຫັນດີເປັນເອກະພາບກັນ ໃນການສົ່ງເສີມການສ້າງ ແລະ ປັບປຸງນິຕິກຳໃຫ້ມີຄວາມຮັດກຸມ, ຮັບປະກັນ ແລະ ສອດຄ່ອງກັບສະພາບການ ໃນການຫັນເປັນດີຈິຕອນ ແລະ ການນຳໃຊ້ປັນຍາປະດິດເພື່ອການພັດທະນາເສດຖະກິດ-ສັງຄົມຂອງບັນດາປະເທດຕ່າງໆ, ຫຼຸດຜ່ອນຄວາມແຕກໂຕນທາງດ້ານດິຈິຕອນ ເພື່ອຮັບປະກັນການພັດທະນາແບບຍືນຍົງແລະຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາປະເທດທີ່ໃຊ້ພາສາຝຣັ່ງໃຫ້ດີຂຶ້ນ ລວມໄປເຖິງການສົ່ງເສີມການນຳໃຊ້ລະບົບດິຈິຕອນ ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງລັດຖະສະພາຂອງສະມາຊິກຝຣັ່ງໂກໂຟນີ ໃຫ້ມີການພັດທະນາເລື້ອຍໆ.

ຜົນຂອງກອງປະຊຸມຄັ້ງນີ້ ຈະເປັນຂໍ້ມູນທີ່ສຳຄັນເພື່ອສັງລວມເປັນຮ່າງບົດລາຍງານຂອງກຳມາທິການວຽກງານສະມາຊິກລັດຖະສະພາ ແລະ ຈະຖືກຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາຝຣັ່ງໂກໂຟນີ ຄັ້ງທີ 50 ເຊິ່ງຈະຈັດຂຶ້ນໃນເດືອນກໍລະກົດ 2025 ທີ່ນະຄອນຫຼວງປາຣີ, ປະເທດຝຣັ່ງ.

**(ຂ່າວ: ກົມພົວພັນລັດຖະສະພາຫຼາຍຝ່າຍ, ພາບ: ກົມສື່ມວນຊົນ)**

# ປະເມີນຜົນການປະຕິບັດໂຄງການຄົ້ນຄວ້າ ແລະ ປັບປຸງນິຕິກຳ



(ສພຊ) - ວັນທີ 12-13 ມີນານີ້ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມການປະເມີນຜົນໄດ້ຮັບການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ໃນວຽກງານການຄົ້ນຄວ້າ ແລະ ການປັບປຸງນິຕິກຳ ພາຍໃຕ້ການສະໜັບສະໜູນຂອງມູນນິທິເອເຊຍ (The Asia Foundation - TAF) ໂດຍການເປັນປະທານຂອງທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຮອງຫົວໜ້າສະຖາບັນ, ຄະນະກົມ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຊ, ບັນດາທ່ານປະທານ-ຮອງປະທານ, ຄະນະກຳມະການ, ເລຂາທິການ ແລະ ພະນັກງານທີ່ກ່ຽວຂ້ອງຂອງສະພາປະຊາຊົນ ແຂວງ (ສພຂ) 6 ແຂວງເປົ້າໝາຍຄື: ຫຼວງພະບາງ, ຫົວພັນ, ຊຽງຂວາງ, ວຽງຈັນ, ຄຳມ່ວນ ແລະ ສະຫວັນນະເຂດ ພ້ອມດ້ວຍຕາງໜ້າມູນນິທິອາເຊຍ ປະຈຳ ສປປລາວ; ຈຸດປະສົງແມ່ນເພື່ອປະເມີນຄືນປະສິດທິພາບ ແລະ ປະ ສິດທິຜົນຂອງການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບການສະໜັບສະໜູນພາຍໃຕ້ທຶນດັ່ງກ່າວໃນຕະຫຼອດໄລຍະ 3 ປີຜ່ານມາ ເພື່ອຈະນຳເອົາຜົນຂອງການປະເມີນເປັນຂໍ້ມູນອ້າງອີງໃນການພັດທະນາໂຄງການໃນອະນາຄົດພ້ອມທັງເຫັນໄດ້ເຖິງຜົນສຳເລັດ ແລະ ຂໍ້ຄົງຄ້າງທີ່ຕ້ອງ ໄດ້ຮັບການປັບປຸງ.

ທ່ານ ປອ. ອາຄົມ ປຣະເສີດ ໄດ້ກ່າວເປີດກອງປະຊຸມວ່າ: ຕະຫຼອດໄລຍະຂອງໂຄງການໄດ້ມີການປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາຂີດຄວາມສາມາດ ແລະ ຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ), ພະນັກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໂດຍຕິດກັບການປະຕິບັດພາລະບົດບາດຂອງ ສສຊ ແລະ ສສຂ ລວມເຖິງວຽກງານຄົ້ນຄວ້ານິຕິກຳ, ການພັດທະນາດ້ານເສດຖະກິດ-ການເງິນ ໂດຍກວມເອົາວຽກງານການຕິດຕາມກວດກາ ແລະ ການຮັບຮອງນິຕິກຳ ເຊິ່ງສະແດງອອກໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆເຊັ່ນ: ການຈັດກອງປະຊຸມເຝິກອົບຮົມ, ສຳມະນາ, ກອງປະຊຸມທົບທວນບັນດາຮ່າງກົດໝາຍ, ການສະໜັບສະໜູນການສຶກສາຄົ້ນຄວ້າ, ການສ້າງປຶ້ມຄູ່ມື, ການລົງພົບປະປະຊາຊົນ, ການສະໜັບສະໜູນຜູ້ແທນຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໄປທັດສະນະຢູ່ຕ່າງປະເທດ ແລະ ການສະໜອງຂໍ້ມູນໂດຍຊ່ຽວຊານເພື່ອເປັນບ່ອນອີງໃນການພິຈາລະນາບັນຫາແລະນິຕິກຳຕ່າງໆ.

ກອງປະຊຸມໄດ້ຮັບຟັງການສັງລວມໂຄງການໂດຍຫຍໍ້ ແລະການຈັດຕັ້ງປະຕິບັດກິດຈະກຳທີ່ຜ່ານມາ; ປະຫວັດ ແລະ ຄວາມສຳຄັນຂອງການປະເມີນ, ກິດຈະກຳ, ແນະນຳວິທີຖາມຕອບ. ຜູ້ເຂົ້າຮ່ວມກໍໄດ້ສະໜອງຂໍ້ມູນ ຕໍ່ແບບສອບຖາມ, ການປະກອບຄຳເຫັນແລະຖອດຖອນບົດຮຽນກ່ຽວກັບຜົນການຈັດຕັ້ງປະຕິບັດໂຄງການໃນ ໄລຍະຜ່ານມາ ພ້ອມທັງສົນທະນາແລກປ່ຽນເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະເພື່ອເປັນຂໍ້ມູນພັດທະນາໂຄງການໃນອະນາຄົດເວົ້າລວມ, ເວົ້າສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ສພຊ ແລະ ສພຂ ໃນວຽກງານການຄົ້ນຄວ້າ, ການປັບປຸງນິຕິກຳ ແລະການພັດທະນາເສດຖະກິດ-ການເງິນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ມອບ-ຮັບນ້ຳດື່ມ ສະໜັບສະໜູນກອງປະຊຸມສະໄໝວິສາມັນເທື່ອທີ 2




(ສພຊ) - ວັນທີ 14 ມີນານີ້ ທີ່ຫ້ອງຮັບແຂກຕຶກເລຂາທິການສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບ ນ້ຳດື່ມ ມີນີໂຣເພື່ອສະໜັບສະໜູນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຈຳນວນ 150 ຫີບ ມູນຄ່າ 30 ລ້ານກີບ ຈາກກຸ່ມບໍລິສັດ DSK ຈຳກັດ, ໂດຍການກ່າວມອບຂອງທ່ານນາງ ພອນສະຫວັນ ແສນບຸດຕະລາວ ຜູ້ຊ່ວຍວຽກບໍລິຫານຂອງກຸ່ມບໍລິສັດດັ່ງກ່າວ, ຕາງໜ້າກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ແລະ ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# 3 ອົງການຈັດຕັ້ງມະຫາຊົນກະຊວງກະສິກຳ ແລະ ປ່າໄມ້ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 13 ມີນານີ້, ກົມສື່ມວນຊົນ ໄດ້ຕ້ອນຮັບ ແລະ ນຳພາ 3 ອົງການຈັດຕັ້ງມະຫາຊົນຈາກກະຊວງກະສິກຳ ແລະ ປ່າໄມ້ ຈຳນວນ 30 ສະຫາຍ ເຊິ່ງນຳໂດຍສະຫາຍ ສົມຫວັງ ພົມມະສອນ ກຳມະການຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານກະຊວງກະສິກຳ ແລະ ປ່າໄມ້ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX).

**(ນາງ ອາລິນ ສຸພົມມະປະດິດ)**




## ຍົກສູງ...

(ຕໍ່ຈາກໜ້າ 1)

ເຫັນໃສ່ຮ່າງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ໄດ້ຮັບຟັງລາຍງານກ່ຽວກັບນະໂຍບາຍພິເສດໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳ ໂດຍແມ່ນທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ໄດ້ຕາງໜ້າໃຫ້ລັດຖະບານ ມາລາຍງານຕໍ່ກອງປະຊຸມ ແລະ ໄດ້ເຊື່ອມຊຶມມະຕິຂອງຄະນະບໍລິຫານງານສູນກາງພັກ ກ່ຽວກັບການປັບປຸງກົງຈັກລັດຖະບານ ສະເໜີໂດຍທ່ານ ນາງ ສີໃສ ລືເດດມູນສອນ ຫົວໜ້າຄະນະຈັດຕັ້ງສູນກາງ ຕາງໜ້າໃຫ້ຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ.

ໃນຕອນທ້າຍກອງປະຊຸມ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນສະຫຼຸບ ໂດຍເນັ້ນໜັກໃຫ້ຄວາມສຳຄັນຂອງການດຳເນີນກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃນຄັ້ງນີ້ ເພາະມີຫຼາຍບັນຫາສຳຄັນນຳມາພິຈາລະນາເພື່ອສ້າງຄວາມເປັນເອກະພາບສູງຕໍ່ນະໂຍບາຍແນວທາງຂອງພັກ, ກົດໝາຍຂອງລັດ ຕໍ່ບັນຫາທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ແລະ ໄດ້ຮຽກຮ້ອງໃຫ້ ສສຊ ຈົ່ງໄດ້ສົ່ງເສີມສະຕິປັນຍາແລະຍົກສູງຄວາມເປັນເອກະພາບຕໍ່ບັນຫາສຳຄັນດັ່ງກ່າວ ເພື່ອເຮັດໃຫ້ການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ບັນລຸຜົນສຳເລັດຕາມທີ່ວາງໄວ້.




## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ໄກປະຈຳໜຶ່ງຂອງ APF ທີ່ຈະຖືກຈັດຂຶ້ນທຸກໆປີໃນປະເທດສະມາຊິກຂອງ APF ເພື່ອໃຫ້ລັດຖະສະພາສະມາຊິກ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນໃນການປະຕິບັດວຽກງານຂອງຕົນເພື່ອໃຫ້ມີຄວາມສອດຄ່ອງກັນໃນພາກພື້ນ ແລະ ທົ່ວໂລກ. ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍໃຕ້ການເປັນປະທານຮ່ວມລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະສະມັດຊາລັດຖະສະພາຝຣັ່ງໂກໂຟນີ ເຊິ່ງມີຄະນະຜູ້ແທນລັດຖະສະພາ 11 ປະເທດ ແລະເຂດແຄວ້ນ, ກອງເລຂາ APF ແລະສູນລັດຖະສະພາອາຊີ (PCAsia) ເຂົ້າຮ່ວມລວມທັງໝົດ 65 ທ່ານ.

ໃນກອງປະຊຸມດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານປະສະພາແຫ່ງຊາດລາວ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນຕໍ່ພິທີເປີດ ໂດຍທ່ານໄດ້ຍົກໃຫ້ເຫັນເຖິງສະພາບການພົ້ນເດັ່ນ ແລະ ສິ່ງທ້າທາຍຕ່າງໆ ທີ່ພວມເກີດຂຶ້ນໃນຫຼາຍພາກພື້ນທົ່ວໂລກ ທີ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ການເມືອງ ແລະ ຄວາມໝັ້ນຄົງຂອງບັນດາປະເທດຕ່າງໆ. ພ້ອມກັນນັ້ນ, ທ່ານຍັງໄດ້ຕີລາຄາສູງຕໍ່ບົດບາດຄວາມສຳຄັນຂອງສະມາຊິກລັດຖະສະພາ APF ໃນຖານະທີ່ເປັນຕົວແທນແຫ່ງສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນໃນການສົ່ງເສີມປະຊາທິປະໄຕ, ການປົກຄອງລັດດ້ວຍກົດໝາຍ ແລະຊຸກຍູ້ການຮ່ວມມືໃນພາກພື້ນ ແລະ ສາກົນ ເພື່ອການພັດທະນາ, ລວມໄປເຖິງການສົ່ງເສີມການແລກປ່ຽນທາງດ້ານວັດທະນະທຳຂອງປະຊາຊົນ; ນອກຈາກນັ້ນ, ທ່ານຍັງໄດ້ຍົກໃຫ້ເຫັນເຖິງການປະກອບສ່ວນຂອງສະພາແຫ່ງຊາດລາວ ໃນຂອບສະມັດຊາລັດຖະສະພາຝຣັ່ງໂກໂຟນີກໍຄືການຮ່ວມມືໃນຂອບຝຣັ່ງໂກໂຟນີຂອງລັດຖະບານ ເຊິ່ງສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາສັນຕິພາບ, ສະຖຽນລະພາບແລະການຮ່ວມມືເພື່ອການພັດທະນາ. ໃນໂອກາດນີ້, ທ່ານໄດ້ຮຽກຮ້ອງໃຫ້ລັດຖະສະພາສະມາຊິກຝຣັ່ງໂກໂຟນີ ເພີ່ມທະວີບົດບາດ ແລະ ໜ້າທີ່ຂອງຕົນ ໃນການຕິດຕາມ ແລະ ຮ່ວມມືກັນຢ່າງໃກ້ຊິດ ເພື່ອກຽມພ້ອມຮັບມື ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາປະເທດສະມາຊິກຝຣັ່ງໂກໂຟນີ ກໍຄືທົ່ວໂລກ ຢ່າງສັນຕິວິທີ.

ກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາຄັ້ງນີ້ ຍັງມີການຈັດກອງປະຊຸມສຳມະນາເປັນເວລາເຄິ່ງວັນ ເພື່ອໃຫ້ບັນດາຜູ້ແທນກອງປະຊຸມໄດ້ສຸມໃສ່ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນຮ່ວມກັນ ກ່ຽວກັບການນຳໃຊ້ປັນຍາປະດິດເຂົ້າໃນວຽກງານລັດຖະສະພາ ໂດຍຈະດຳເນີນໄປພາຍໃຕ້ 3 ຫົວຂໍ້ສຳຄັນຄື: 1. ການມີສ່ວນຮ່ວມຂອງເຄື່ອງມືດິຈິຕອນ ໃນການປະຕິບັດໜ້າທີ່ວຽກງານຂອງລັດຖະສະພາ, 2. ວິທີການໃໝ່ໃນການປະເມີນນະໂຍບາຍສາທາລະນະຂອງລັດຖະສະພາ ແລະ 3. ການຕອບໂຕ້ກັບຂ່າວທີ່ບໍ່ເປັນຈິງ; ກອງປະຊຸມສະມັດຊາລັດຖະສະພາຝຣັ່ງໂກໂຟນີ ຈະດຳເນີນໄປເປັນເວລາ 3 ວັນ ລະຫວ່າງວັນທີ 12-14 ມີນາ 2025.

**(ຂ່າວ: ກົມພົວພັນລັດຖະສະພາຫຼາຍຝ່າຍ, ພາບ: ກົມສື່ມວນຊົນ)**

# ເຝິກອົບຮົມຂຽນຂ່າວ ແລະ ຕັດຕໍ່ວິດີໂອແບບມືອາຊີບ



(ສພຊ)-ວັນຈັນທີ 10-14 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມເຝິກອົບຮົມວຽກງານສື່ມວນຊົນ ພາຍໃຕ້ຫົວຂໍ້: "ການຂຽນຂ່າວໃຫ້ມີມາດຕະຖານສູງ, ໜ້າສົນໃຈ ແລະ ການຕັດຕໍ່ວິດີໂອແບບມືອາຊີບ" ໃຫ້ລັດຖະກອນຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ (ສພຂ) ແລະ ກົມສື່ມວນຊົນ ຂອງຄະນະເລຂາທິການສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານກ່າວເປີດຂອງທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ; ເຂົ້າຮ່ວມມີວິທະຍາກອນ, ຄະນະກົມ, ຄະນະພະແນກ ແລະ ສຳມະນາກອນຈາກສພຂ 9 ແຂວງ ຄື: ນະຄອນຫຼວງວຽງຈັນ, ຫຼວງນ້ຳທາ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ຈຳປາສັກ, ເຊກອງ ແລະ ອັດຕະປື.

ຈຸດປະສົງຕົ້ນຕໍແມ່ນເພື່ອປັບປຸງເຄືອຂ່າຍການຕອບສະໜອງຂໍ້ມູນຂ່າວສານລະຫວ່າງສະພາປະຊາຊົນຂັ້ນແຂວງ (ທ້ອງຖິ່ນ) ກັບສະພາແຫ່ງຊາດ (ກົມສື່ມວນຊົນ) ໃນໜ້າໜັງສືພິມ, ລາຍການວິທະຍຸແລະໂທລະພາບຜູ້ແທນປະຊາຊົນ ໃຫ້ປົກກະຕິ ແລະ ສະໝ່ຳສະເໝີ; ສ້າງທ່າແຮງບົ່ມຊ້ອນ ແລະ ເພີ່ມທະວີຂີດຄວາມຮູ້, ຄວາມສາມາດ ໃນການຂຽນເນື້ອໃນຂ່າວ, ຖ່າຍທຳ-ຕັດຕໍ່ວິດີໂອ ໃຫ້ຜູ້ຮັບຜິດຊອບວຽກງານສື່ມວນຊົນຂອງ ສພຊ ແລະ ສພຂ ມີຄວາມຊຳນານຢ່າງມືອາຊີບ.

ທ່ານ ປອ. ພົດສະໄໝ ບຸນວິໄລ ໄດ້ກ່າວວ່າ: ວຽກງານສື່ມວນຊົນ ເປັນວຽກງານທີ່ສຳຄັນໃນການຮັບໃຊ້ສັງຄົມໃນໄລຍະໃໝ່ ເຊິ່ງແມ່ນຄວາມຮຽກຮ້ອງຕ້ອງການຢ່າງພາວະວິໄສ ແລະ ສຳຄັນທີ່ສຸດໃນການຄຸ້ມຄອງສັງຄົມ ເຮັດໃຫ້ທຸກການຄຸ້ມຄອງບໍລິຫານວຽກງານຂອງພັກ ແລະ ລັດ ກາຍເປັນທີ່ຮັບຮູ້, ເຂົ້າໃຈຂອງປວງຊົນລາວທັງຊາດ ເຊິ່ງຍາມໃດພັກ-ລັດ ກໍໄດ້ຖືເອົາວຽກງານສື່ມວນຊົນ ເປັນວຽກຍຸດທະສາດ, ເປັນວຽກງານປະຈັນບານປະເຊີນໜ້າກັບຄວາມທ້າທາຍໃນການເຮັດໜ້າທີ່ວຽກງານການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ປະຊາຊົນບັນດາເຜົ່າ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການຊ່ວຍເຫຼືອທາງດ້ານງົບປະມານຈາກສູນລັດຖະສະພາອາຊີ (Parliamentar Centre of Asia - PCAsia).

**(ນາງ ອາລິນ ສຸພົມມະປະດິດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ໃຫ້ຮູ້ວ່າ: ບັນດາກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ ໄດ້ປະສານສົມທົບກັບລັດຖະບານ ແລະພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນ ທີ່ຈະນຳເຂົ້າພິຈາລະນາຕົກລົງຢູ່ກອງປະຊຸມໃນຄັ້ງນີ້; ມາເຖິງປັດຈຸບັນ, ເຫັນວ່າການກະກຽມແມ່ນໄດ້ມີຄວາມຮັບປະກັນຮອບດ້ານ, ຄົບຖ້ວນສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ.

ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນໃນລະຫວ່າງວັນທີ 17- 20 ມີນາ 2025 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ຈະໃຊ້ເວລາດຳເນີນກອງປະຊຸມ 4 ວັນ ເຊິ່ງຈະພິຈາລະນາ ແລະ ຮັບຮອງເອົາເນື້ອໃນສຳຄັນດັ່ງນີ້:

1. ບົດລາຍງານກ່ຽວກັບການປັບປຸງລັດຖະທຳມະນູນສະບັບປີ 2025.

2. ບົດລາຍງານການປັບປຸງກົດໝາຍ ຈຳນວນ 2 ສະບັບຄື: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແລະກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

3. ບົດລາຍງານຂອງລັດຖະບານ ກ່ຽວກັບວຽກງານກົງຈັກຂອງລັດຖະບານ.

4. ບົດລາຍງານຂອງລັດຖະບານ ກ່ຽວກັບການຄົ້ນຄວ້ານະໂຍບາຍພິເສດໃຫ້ແກ່ຜູ້ພັດທະນາແລະລົງທຶນໃນນິຄົມອຸດສາຫະກຳອຳມະຕະ.

5. ມະຕິສະພາແຫ່ງຊາດ ຈຳນວນ 5 ສະບັບ ຄື: 1) ມະຕິວ່າດ້ວຍການຮັບຮອງເອົາການປັບປຸງລັດຖະທຳມະນູນ ສະບັບປີ 2025; 2) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບປັບປຸງປີ 2025; 3) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປັບປຸງປີ 2025; 4) ມະຕິວ່າດ້ວຍການຮັບຮອງເອົາວຽກງານຂອງລັດຖະບານ; 5) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຄົ້ນຄວ້ານະໂຍບາຍພິເສດໃຫ້ແກ່ຜູ້ພັດທະນາແລະລົງທຶນໃນນິຄົມອຸດສາຫະກຳອຳມະຕະ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໃນນາມຫົວໜ້າກອງເລຂາກອງປະຊຸມສະໄໝວິສາມັນເທື່ອທີ 2, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງພ້ອມກັນຕິດຕາມການດຳເນີນກອງປະຊຸມສະໄໝວິສາມັນຄັ້ງນີ້ ແລະ ຍັງແຈ້ງໃຫ້ຊາບວ່າ ໃນໄລຍະດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

ສາຍດ່ວນ: 156 ໃນໂມງລັດຖະການ

ອີເມວ: nalao.156@gmail.com

App: Laona

# ເຜີຍແຜ່ຜົນສຳເລັດຂອງກອງປະຊຸມ ສະໄໝສາມັນເທື່ອທີ 8 ຢູ່ກະຊວງ ກປ




(ສປນວ) - ວັນທີ 7 ມີນາ ຜ່ານມາ ທີ່ສະໂມສອນກະຊວງກະສິກຳແລະປ່າໄມ້(ກປ), ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ນຳໂດຍທ່ານ ຣສ. ປອ. ລິນຄຳດວງສະຫວັນລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ນາງ ສົມພຽນ ວົງໄຊ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນນະຄອນຫຼວງວຽງຈັນ, ທ່ານທະນົງສິດ ເມືອງຈັນ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງມີຫົວໜ້າ-ຮອງຫົວໜ້າກົມ, ພະແນກ, ກອງເລຂາສະພາວິທະຍາສາດ, ສູນ, ສະຖາບັນ ແລະພະນັກງານຫຼັກແຫຼ່ງອ້ອມຂ້າງກະຊວງ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ; ທັງນີ້, ກໍເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ ກ່ຽວກັບຜົນສຳເລັດຂອງກອງປະຊຸມດັ່ງກ່າວ.

ທ່ານ ນາງ ຈັນທະຄອນ ບົວລະພັນ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ລາຍງານໂດຍຫຍໍ້ສະພາບລວມການຈັດຕັ້ງປະຕິບັດວຽກງານຂອງກະຊວງໃນໄລຍະຜ່ານມາ; ຈາກນັ້ນ, ກໍໄດ້ຮັບຟັງຄຳຄິດເຫັນຂອງຜູ້ມີສິດເລືອກຕັ້ງຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ບັນດາບັນຫາພົ້ນເດັ່ນຕ່າງໆ ເປັນຕົ້ນແມ່ນການຂະຫຍາຍຕະຫຼາດກະສິກຳສະອາດໃຫ້ຫຼາຍຂຶ້ນ ໂດຍໄດ້ສະເໜີໃຫ້ຈັດສັນງົບປະມານລົງໄປກວດກາ, ວິເຄາະວິໄຈສານພິດຕົກຄ້າງໃນພືດຜັກຕາມທ້ອງຕະຫຼາດ ເພື່ອຄວາມປອດໄພຂອງຜູ້ບໍລິໂພກ ພ້ອມນີ້, ຍັງມີບັນຫາການມົ້ວສຸມສິ່ງເສບຕິດທີ່ແຜ່ລະບາດຫຼາຍ ແລະ ການຄຸ້ມຄອງດິນກະສິກຳໃຫ້ມີຄວາມເຂັ້ມງວດຕື່ມ ເຊິ່ງຈະເປັນຂໍ້ມູນໃຫ້ແກ່ ສສຊ ນຳໄປຄົ້ນຄວ້າພິຈາລະນາ, ປະກອບຄຳຄິດເຫັນ ເຂົ້າໃນການພິຈາລະນາບັນຫາສຳຄັນຕ່າງໆ ໃນກອງປະຊຸມສະໄໝສາມັນໃນຕໍ່ໜ້າ.

# ສສຊ ແລະ ສສຂ ໄຊຍະບູລີ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນຢູ່ເມືອງທົ່ງສານແລະເມືອງພຽງ



(ສພຂ) - ວັນທີ 7 ມີນາ ຜ່ານມາ, ທ່ານ ຈັດຕະວາ ແກ້ວຄຳເຜີດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, ປະທານຄະນະກຳມາທິການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍທ່ານ ແຫຼ້ ອ່ອນສົມບູນ ຮອງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ ເມືອງທົ່ງສາ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ຢູ່ສະໂມສອນກອງບັນຊາການປ້ອງກັນຄວາມສະຫງົບເມືອງ; ໂດຍມີຄະນະປະຈຳ ແລະ ກຳມະການພັກເມືອງ, ຫົວໜ້າຫ້ອງການ-ອົງການ, ຫົວໜ້າກອງບັນຊາການທະຫານ, ຕຳຫຼວດ, ຫົວໜ້າລັດວິສາຫະກິດ-ສູນປະຈຳເມືອງ, ສະມາຊິກພັກ, ພະນັກງານ-ລັດຖະກອນເຂົ້າຮ່ວມຮັບຟັງ. ໃນວັນທີ 12 ມີນາ, ທ່ານ ຈັດຕະ ວາ ແກ້ວຄຳເຜີດ ພ້ອມດ້ວຍຄະນະຕິດຕາມ ຍັງເຄື່ອນໄຫວເຜີຍແຜ່ຢູ່ເມືອງພຽງ ໂດຍການຕ້ອນຮັບຈາກທ່ານ ບຸດສະ ກອນ ອິນທະລັງສີ ເຈົ້າເມືອງໆພຽງແລະການນຳເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ.

ທັງນີ້, ກໍເພື່ອຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນ, ບັນຫາສຳຄັນຕ່າງໆທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ໄຊຍະບູລີ ຊຸດທີ II ແນໃສ່ເຮັດໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນພາຍໃນ 2 ເມືອງ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງການຕົກລົງ ແລະ ຮັບຮອງເອົາບັນດານິຕິກຳຕ່າງໆ ແລະ ບັນຫາສຳຄັນຂອງຊາດ ກໍຄືຂອງແຂວງໄຊຍະບູລີແລ້ວນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນຢ່າງເລິກເຊິ່ງ, ຖືກຕ້ອງ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

ໃນການເຄື່ອນໄຫວຄັ້ງນີ້, ຍັງໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດບາງວຽກງານທີ່ພົ້ນເດັ່ນຂອງເມືອງໃນໄລຍະ 1 ປີຜ່ານມາພ້ອມທັງຮັບຟັງຄຳຄິດຄຳເຫັນ, ຄຳສະເໜີ ແລະ ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ທີ່ຕິດພັນເຖິງຊີວິດການເປັນຢູ່.

# ສພຂ ເຊື່ອມຊຶມມະຕິ 16 ຂອງຄະນະບໍລິຫານງານພັກແຂວງຫົວພັນ



(ສພຂ) - ຕອນເຊົ້າວັນສຸກທີ 7 ມີນາຜ່ານມານີ້, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຊື່ອມຊຶມມະຕິກອງປະຊຸມຄົບຄະນະຄັ້ງທີ 16 ສະໄໝທີ X ຂອງຄະນະບໍລິຫານງານພັກແຂວງຫົວພັນ ແລະ ມະຕິ ກອງປະຊຸມອົງການປົກຄອງແຂວງປີ 2024, ໂດຍການເຜີຍແຜ່ຂອງສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີບັນດາສະຫາຍຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກແລະພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ໄດ້ຮັບຮູ້, ເຂົ້າໃຈເນື້ອໃນດັ່ງກ່າວ ໂດຍຫັນເປັນແຜນການ, ແຜນງານ, ໂຄງການ, ມີການແບ່ງຄວາມຮັບຜິດຊອບລະອຽດ ພ້ອມທັງຈັດຕັ້ງປະຈຸບັດໃຫ້ໄດ້ຮັບຜົນດີ ແລະ ກຳແໜ້ນເນື້ອໃນຈິດໃຈມະຕິ 16 ສະໄໝທີ X ຂອງຄະນະບໍລິຫານງານພັກແຂວງ ຢ່າງເລິກເຊິ່ງ ເພື່ອສືບຕໍ່ຍູ້ແຮງ ແລະ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກແລະການຄຸ້ມຄອງບໍລິຫານຂອງລັດ, ເຮັດໃຫ້ໂສມໜ້າໃໝ່ຂອງປະເທດຊາດ ເວົ້າລວມ, ເວົ້າສະເພາະກໍຄືແຂວງຫົວພັນ ມີການປ່ຽນແປງຢ່າງຫຼວງຫຼາຍຮອບດ້ານ ໃນນັ້ນ, ຕ້ອງຍູ້ແຮງການຈັດຕັ້ງຜັນຂະຫຍາຍເຂົ້າສູ່ຊີວິດຕົວຈິງ ໃຫ້ເປັນຂະບວນການຟົດຟື້ນ, ກວ້າງຂວາງ ແລະ ແຂງແຮງຂອງມະຫາຊົນ; ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານທາງດ້ານຄວາມຮູ້-ຄວາມສາມາດ, ທັກສະ, ແນວຄິດ ແລະ ການກະທຳ ແນໃສ່ສົ່ງເສີມດ້ານດີ, ແກ້ໄຂຄວາມບົກຜ່ອງ, ຂໍ້ຄົງຄ້າງແລະສິ່ງທ້າທາຍຕ່າງໆ, ກຳໄດ້ເນື້ອໃນຈິດໃຈມະຕິດັ່ງກ່າວ ພ້ອມກັນນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

# ປະທານ ສພຂ ສະຫວັນນະເຂດ ເຄື່ອນໄຫວຕິດຕາມກວດກາຢູ່ 3 ເມືອງ



(ສພຂ) - ວັນທີ 5-6 ມີນາຜ່ານມາ, ທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດແລະແຜນການລົງທຶນຂອງລັດ ຕາມມະຕິຂອງສະພາປະຊາຊົນແຂວງຮັບຮອງເອົາໃນໄລຍະຜ່ານມາຢູ່ 3 ເມືອງຄື: ພະລານໄຊ, ອາດສະພອນແລະອາດສະພັງທອງ ໂດຍມີບັນດາທ່ານໃນຄະນະພັກ-ຄະນະປົກຄອງເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ພະແນກການທີ່ກ່ຽວຂ້ອງ ແລະ ຄະນະຫ້ອງການອ້ອມຂ້າງ 3 ເມືອງ ເຂົ້າຮ່ວມ.

ຄະນະນຳທັງ 3 ເມືອງ ໄດ້ລາຍງານໂດຍສັງເຂບໃນຂົງເຂດວຽກງານເສດຖະກິດໄລຍະຜ່ານມາ ເຊິ່ງມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດຕາມຄາດໝາຍ; ຈາກນັ້ນ, ໄດ້ຮັບຟັງການລາຍງານຈາກພະແນກການ ແລະ ຫ້ອງການເມືອງທີ່ກ່ຽວຂ້ອງ ເປັນຕົ້ນແມ່ນວຽກງານອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນ ສົ່ງ, ກະສິກຳ ແລະ ປ່າໄມ້ ພ້ອມທັງມີການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ທ່ານ ກົງແກ້ວ ມີວໍລະຈັກ ໄດ້ເຈາະຈີ້ມບາງບັນຫາຢ່າງກົງໄປກົງມາ ພ້ອມທັງໃຫ້ທິດຊີ້ນຳທີ່ເປັນປະໂຫຍດຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ເພື່ອໃຫ້ບັນລຸໄດ້ຕາມທິດທາງແຜນການທີ່ວາງໄວ້.

ໂອກາດນີ້, ຄະນະຍັງໄດ້ໄປຢ້ຽມຢາມແລະຊຸກຍູ້ກຸ່ມຜະລິດເຫຼົ້າຂາວບ້ານແກ້ງພານເມືອງພະລານໄຊ, ໂຄງການກໍ່ສ້າງຝາຍນ້ຳລົ້ນ ບ້ານນາມົນ ເມືອງອາດສະພອນ, ໂຄງການກໍ່ສ້າງສຸກສາລາ ແລະ ເຮືອນພັກແພດ ເຂດໂພນຜາງເມືອງອາດສະພັງທອງ ພ້ອມທັງມອບບົກຈຳນວນໜຶ່ງໃຫ້ຈຸດທີ່ໄປຢ້ຽມຢາມອີກດ້ວຍ.

# ສພຂ ສະຫວັນນະເຂດ ເຜີຍແຜ່ກົດໝາຍ 2 ສະບັບ



(ສພຂ) - ວັນທີ 5-6 ມີນາຜ່ານມາ, ທ່ານ ສະແຫວງ ນັນທະວົງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ພູທອນ ພຸດທະຂັນຕີ ສະມາຊິກສະພາສະພາປະຊາຊົນແຂວງ (ສສຂ), ເລຂາທິການສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍຢູ່ກຸ່ມບ້ານເຊບັ້ງນວນເມືອງສອງຄອນ, ກຸ່ມບ້ານຫົວຫາດ ເມືອງໄຊພູທອງ, ກຸ່ມບ້ານຫຼຽນໄຊ ແລະ ກຸ່ມບ້ານໄລກະທະ ເມືອງອາດສະພັງທອງ ໂດຍການຕ້ອນຮັບຈາກບັນດາທ່ານເຈົ້າເມືອງແລະຮອງເຈົ້າເມືອງ, ສສຂ ປະຈຳເຂດເລືອກຕັ້ງເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ, ທະຫານ-ຕຳຫຼວດຕະຫຼອດຮອດອຳນາດການປົກຄອງກຸ່ມບ້ານເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ການໂຄສະນາເຜີຍແຜ່ຄັ້ງນີ້ ມີ2ກົດໝາຍຄື: ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເຊິ່ງເປັນກົດໝາຍທີ່ທຸກຄົນຕ້ອງໄດ້ຮັບຮູ້ກ່ຽວກັບສິດ ແລະ ໜ້າທີ່ຂອງ ສພຂ ເປັນຕົ້ນ: 1. ສິດ ແລະ ໜ້າທີ່ດ້ານນິຕິກຳ, 2. ສິດ ແລະໜ້າທີ່ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, 3. ສິດ ແລະ ໜ້າທີ່ດ້ານການຕິດຕາມກວດກາ; ສຳລັບກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແມ່ນມີຄວາມໝາຍສຳຄັນ ແລະ ຈຳເປັນ ທີ່ຕິດພັນກັບການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງໃນປັດຈຸບັນຂອງອົງການປົກຄອງເມືອງ ຕະຫຼອດຮອດກຸ່ມບ້ານ ແລະ ບ້ານ ໂດຍສະເພາະການແນະນຳໃຫ້ປະຊາຊົນເຂົ້າໃຈຂັ້ນຕອນໃນການປະກອບເອກະສານ ເປັນຕົ້ນ: ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳເຊິ່ງເອກະສານທັງ 3 ຢ່າງນີ້ແມ່ນມີຄວາມໝາຍແຕກຕ່າງກັນ.

ບັນດາທ່ານ ສສຊ, ສສຂ ໄດ້ຈຳແນກ ແລະ ຊີ້ແຈງຕໍ່ຜູ້ເຂົ້າຮ່ວມຮັບຟັງຢ່າງລະອຽດຖີ່ຖ້ວນ ເພື່ອຍົກລະດັບຄວາມຮູ້, ຄວາມເຂົ້າໃຈເຖິງເນື້ອໃນຂອງກົດໝາຍ ໂດຍສະເພາະຜູ້ທີ່ເຄີຍຜ່ານການຮຽນກົດໝາຍມາແລ້ວ ກໍຍິ່ງເປັນການເພີ່ມທະວີຄວາມຮູ້ທາງດ້ານກົດໝາຍໃຫ້ເລິກເຊິ່ງ ແລະ ໜັກແໜ້ນຂຶ້ນຕື່ມ, ມີຄວາມເປັນເອກະພາບຕໍ່ເນື້ອໃນກົດໝາຍ ແລ້ວນຳໄປຈັດຕັ້ງປະຕິບັດໃຫ້ເຂົ້າສູ່ຊີວິດຕົວຈິງໃນສັງຄົມໃຫ້ກວ້າງຂວາງ ແລະ ເລິກເຊິ່ງຂຶ້ນເທື່ອລະກ້າວ; ພາຍຫຼັງເຜີຍແຜ່ສອງກົດໝາຍສຳເລັດແລ້ວ ກໍໄດ້ມີການສົນທະນາ ແລະ ແລກປ່ຽນຄຳຄິດຄຳເຫັນ ໂດຍສະເພາະບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດລະບຽບກົດໝາຍຂອງທ້ອງຖິ່ນໃນໄລຍະຜ່ານມາ.

# ສະມາຊິກສະພາ ເຄື່ອນໄຫວວຽກງານ ຢູ່ເມືອງມຸນລະປາໂມກ ແລະ ເມືອງປາກຊ່ອງ



(ສພຂ) - ວັນທີ 28 ກຸມພາຜ່ານມາ, ທ່ານ ນາງ ບຸນສຸວັນ ໂພໄຊຊະນະສັກ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15, ຮອງອຳນວຍການສະຖາບັນການເມືອງ-ການປົກຄອງແຂວງຈຳປາສັກ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ພະນັກງານຂອງສະພາປະຊາຊົນແຂວງ (ສພຂ) ແລະ ໜ່ວຍເຂດເລືອກຕັ້ງປະຈຳເມືອງ ໄດ້ເຄື່ອນໄຫວພົບປະຢ້ຽມຢາມພະນັກງານ-ລັດຖະກອນຂອງອົງການປົກຄອງເມືອງມຸນລະປາໂມກ.

ທັງນີ້, ກໍເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຈຳປາສັກ ຊຸດທີ II ໃຫ້ພະນັກງານ-ລັດຖະກອນຂອງອົງການປົກຄອງເມືອງ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕິດພັນກັບການລົງເກັບກຳສະພາບການ, ບັນຫາຕ່າງໆທີ່ເກີດຂຶ້ນຢູ່ທ້ອງຖິ່ນ ຜ່ານການສະເໜີຂອງພະນັກງານ-ລັດຖະກອນ ກໍຄືຜູ້ມີສິດເລືອກຕັ້ງ ໃນການແລກປ່ຽນ, ຊີ້ແຈງອະທິບາຍຕໍ່ບາງຄຳສະເໜີ, ບາງບັນຫາທີ່ຕິດພັນກັບຄວາມຮັບຜິດຊອບຂອງ ສສຊ ແລະ ສສຂ; ສ່ວນຄຳສະເໜີທີ່ເປັນບັນຫາໃຫຍ່ຕິດພັນກັບຄວາມຮັບຜິດຊອບຂອງຫຼາຍຂະແໜງການ ແມ່ນໄດ້ບັນທຶກເນື້ອໃນຢ່າງລະອຽດເພື່ອນຳໄປລາຍງານ ຕໍ່ຄະນະປະຈຳ ສພຊ ກໍຄືຄະນະປະຈຳ ສພຂ ຄົ້ນຄວ້າພິຈາລະນາ, ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ.

ໃນການພົບປະຢ້ຽມຢາມຄັ້ງນີ້, ໄດ້ຮັບຟັງການລາຍງານຫຍໍ້ຈາກທ່ານຮອງເຈົ້າເມືອງ ເຊິ່ງຍົກໃຫ້ເຫັນສະພາບຈຸດພິເສດ ແລະ ການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມແລະບັນດາມະຕິຕ່າງໆຂອງສະພາແຫ່ງຊາດແລະສະພາປະຊາຊົນແຂວງຈຳປາສັກ; ຍົກໃຫ້ເຫັນຜົນສຳເລັດ, ຈຸດດີ, ຂໍ້ຄົງຄ້າງ ແລະ ສະເໜີບັນຫາຈຳນວນໜຶ່ງ ທີ່ເປັນສາເຫດເກີດມີຂໍ້ຄົງຄ້າງ ເຊິ່ງຈະຕ້ອງໄດ້ເພີ່ມທະວີໃນການຈັດຕັ້ງປະຕິບັດວຽກງານໃຫ້ມີຜົນສຳເລັດໃນຕໍ່ໜ້າ.

ຕໍ່ກັບການລາຍງານ ແລະ ການສະເໜີ, ບັນດາທ່ານ ສສຊ ແລະ ສສຂ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານການນຳພາທີ່ອົງການປົກຄອງເມືອງມຸນລະປາໂມກຍາດໄດ້ຜົນສຳເລັດຫຼາຍດ້ານ; ພ້ອມທັງຮຽກຮ້ອງໃຫ້ພະນັກງານ-ລັດຖະກອນ ຈົ່ງສູ້ຊົນອົດທົນຜ່ານຜ່າຕໍ່ບັນຫາຄວາມຫຍຸ້ງຍາກ, ສືບຕໍ່ຮັກສາຄວາມສາມັກຄີຮັກແພງ, ຮັກສາມູນເຊື້ອອັນດຸໝັ່ນຂະຫຍັນພຽນ, ສ້າງຄວາມເຂັ້ມແຂງໃນການນຳພາຈັດຕັ້ງປະຕິບັດວຽກງານລວມທັງການສ້າງເສດຖະກິດຄອບຂອງຕົນ ໃຫ້ເປັນຄອບຄົວຕົວແບບ, ປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ ກໍຄືເມືອງມຸນລະປາໂມກ ໃຫ້ຈະເລີນຮຸ່ງເຮືອງເປັນກ້າວໆ.

ໂອກາດນີ້, ຄະນະຍັງໄດ້ນຳເອົາລົດຖີບ ຈຳນວນ 6 ຄັນ ທີ່ໄດ້ຮັບຈາກໂຄງການຊ່ວຍເຫຼືອຂອງປະເທດຍີ່ປຸ່ນ ມອບຕໍ່ໃຫ້ແກ່ນັກຮຽນເກັ່ງ ແລະ ນັກຮຽນທີ່ທຸກຍາກຂາດເຂີນພາຍໃນເມືອງ ອີກດ້ວຍ.

ວັນທີ 4-6 ມີນາຜ່ານມາ, ທ່ານ ຄຳໄຕ ແກ້ວດວງດີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແລະ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຢ້ຽມຢາມປະຊາຊົນຢູ່ 8 ບ້ານຂອງເມືອງປາກຊ່ອງຄື: ຕາໂນດ, ຕະຢຶກເສືອ, ທົ່ງກະຕ່າຍ, ເຊປຽນ, ຫຼັກ 43, ຫຼັກ 35, ຫ້ວຍເສັດ ແລະເສັດຄົດເພື່ອນຳເອົາບັນດາເນື້ອໃນສຳຄັນທີ່ໄດ້ພິຈາລະນາ ແລະຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຈຳປາສັກຊຸດທີ II ລວມທັງ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ເຜີຍແຜ່ໃຫ້ອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ຕິດພັນກັບການເກັບກຳຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງໃນເຂດດັ່ງກ່າວ ເພື່ອນຳໄປລາຍງານຕໍ່ຄະນະປະຈຳສພຊແລະຄະນະປະຈຳສພຂ ຄົ້ນຄວ້າພິຈາລະນາ, ຊຸກຍູ້ພາກສ່ວນກ່ຽວຂ້ອງຂັ້ນຕ່າງໆແກ້ໄຂ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ຄຳໄຕ ແກ້ວດວງດີ ໄດ້ນຳເອົາອຸປະກອນການສຶກສາ ແລະ ອຸປະກອນກິລາ ມອບໃຫ້ແກ່ບ້ານ ແລະ ໂຮງຮຽນໃນແຕ່ລະຈຸດທີ່ເຄື່ອນໄຫວ ລວມມູນຄ່າ 8 ລ້ານກີບ ແລະ ລົດຖີບຈຳນວນ 3 ຄັນ ທີ່ໄດ້ຮັບການຊ່ວຍເຫຼືອ ມອບຕໍ່ໃຫ້ແກ່ນັກຮຽນເກັ່ງ ແລະ ນັກຮຽນທີ່ທຸກຍາກຂາດເຂີນ, ພ້ອມນັ້ນຍັງໄດ້ມອບເງິນຊ່ວຍເຫຼືອໃຫ້ 3 ຄອບຄົວທີ່ຖືກຜົນກະທົບຈາກອັກຄີໄພ ທີ່ບ້ານໜອງຢາລຸ່ມ ຄອບຄົວລະ 5 ລ້ານກີບ ລວມມູນຄ່າ 15 ລ້ານກີບ; ນອກຈາກນີ້, ຍັງໄດ້ມອບອຸປະກອນເຄື່ອງສຽງຮັບໃຊ້ວຽກງານຫ້ອງການ ໃຫ້ແກ່ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງປາກຊ່ອງ ອີກດ້ວຍ.

**(ສົມວິຈິດ ໄຊມີນຕີ ແລະ ອໍລະກີ ເກດດາ)**

# ສສຊ ເຂດ 17 ແລະ ສສຂ ພົບປະ ຢ້ຽມຢາມປະຊາຊົນຢູ່ 3 ເມືອງ



(ສພຂ) - ວັນທີ 4-5 ມີນາຜ່ານມາ, ທ່ານ ນາງ ມີນາ ພອນໄຊສົມພູປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ປະທານສະພາປະຊາຊົນແຂວງ (ສພຂ), ທ່ານ ມະນີໂສ ຊາມຸນຕີ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17, ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 17, ຮອງປະທານ ສພຂ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງສາມັກຄີໄຊ ແລະ ເມືອງສະໜາມໄຊ ໂດຍການຕ້ອນຮັບຂອງອຳນາດການປົກຄອງ ແລະ ປະຊາຊົນບ້ານລະຍາວໃຕ້, ບ້ານລະຍາວກາງ, ບ້ານລະຍາວເໜືອ, ບ້ານກະຍື ແລະ ບ້ານກອງຮັງ ເມືອງສາມັກຄີໄຊ, ບ້ານຕໍມະຍອດ ແລະ ບ້ານໃຫຍ່ແທ ເມືອງສະໜາມໄຊ; ວັນທີ 6 ມີນາ, ທ່ານ ມະນີໂສ ຊາມຸນຕີ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ, ທ່ານ ອຸດສະຫະ ກົມມະເມືອງ ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 17, ສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງໄຊເສດຖາ ໂດຍການຕ້ອນຮັບຂອງອຳນາດການປົກຄອງ ແລະ ປະຊາຊົນບ້ານຫາດຊຸ້ນ, ບ້ານໃຫຍ່ອຸດົມ ແລະ ບ້ານແກ້ງໃຫຍ່.

ໃນການເຄື່ອນໄຫວ ໄດ້ຮັບຟັງການລາຍສະພາບລວມໂດຍຫຍໍ້ຂອງບ້ານ ແລະ ສະເໜີຄວາມຂັດຂ້ອງໝອງໃຈທີ່ຕິດພັນພັນກັບການດຳລົງຊີວິດ ເປັນຕົ້ນ: ການປັບປຸງ ແລະ ຍົກລະດັບເສັ້ນທາງ, ການກໍ່ສ້າງຂົວ, ການສະໜອງໄຟຟ້າ, ທຶນສ້າງຫ້ອງການບ້ານ, ດ້ານນະໂຍບາຍ ແລະ ຊົດເຊີຍຈາກຜົນກະທົບ, ຊົນລະປະທານ (ນ້ຳໃຊ້ບໍ່ໄດ້), ການປະລະການຮຽນ, ການອອກໃບຕາດິນ, ຈັດສັນເນື້ອທີ່ທຳການຜະລິດ, ການແກ້ໄຂລະຫວ່າງບໍລິສັດກັບປະຊາຊົນ. ຈາກນັ້ນ, ສສຊ ແລະ ສສຂ ໄດ້ອະທິບາຍ ແລະ ຊີ້ແຈງບາງຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ, ບາງບັນຫາ ກໍຈະນຳໄປຄົ້ນຄວ້າພິຈາລະນາ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຫາວິທີທາງແກ້ໄຂ; ພ້ອມນັ້ນ, ຍັງໄດ້ເຜີຍແຜ່ບາງເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ອັດຕະປື ຊຸດທີ II ທັງໄດ້ໂອ້ລົມໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ຮັກສາມູນເຊື້ອຄວາມສາມັກຄີຮັກແພງໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ສ້າງເງື່ອນໄຂເສດຖະກິດຄອບຄົວປູກຝັງ-ລ້ຽງສັດ ກຸ້ມຕົນເອງເປັນເຈົ້າຕົນເອງ ໃຫ້ມີການຜະລິດທີ່ໝັ້ນຄົງ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ເຕົ້າໂຮມຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາ, ຕ້ານ ແລະສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆຢ່າງເປັນເຈົ້າການ ໃຫ້ມີຄວາມສະຫງົບປອດໄພ.

**(ວິນັດ ສີສຸລາດ)**

# ກອງປະຊຸມຄັ້ງທີ I-XI ຂອງພັກປະຊາຊົນປະຕິວັດລາວ

**ກອງປະຊຸມໃຫຍ່ ຄັ້ງທີ I ຂອງພັກ (22 ມີນາ - 06 ເມສາ 1955):**

(1). ກອງປະຊຸມໃຫຍ່ ຄັ້ງທີ I ຂອງພັກ ຈັດຂຶ້ນລະຫວ່າງ ວັນທີ 22 ມີນາ ຫາວັນທີ 06 ເມສາ ປີ 1955 ຢູ່ແຂວງຫົວພັນ, ມີຜູ້ແທນສົມບູນເຂົ້າຮ່ວມ 20 ສະຫາຍ, ເຊິ່ງເປັນຕົວແທນ ໃຫ້ແກ່ບັນດາ ສະຫາຍສະມາຊິກພັກ ຈຳນວນ 400 ສະຫາຍ;

(2). ກອງປະຊຸມຄັ້ງນີ້ ແມ່ນກອງປະຊຸມສ້າງຕັ້ງພັກ ເຊິ່ງເອີ້ນຊື່ວ່າ: "ພັກປະຊາຊົນລາວ (ພັກປະຊາຊົນປະຕິວັດລາວ ໃນປະຈຸບັນ)":

1. ກຳນົດເອົາວັນທີ 22 ມີນາ 1955 ເປັນວັນສ້າງຕັ້ງພັກ,

2. ເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະກອບມີ 05 ສະຫາຍ, ຕໍ່ມາໄດ້ມີການບົ່ງຕົວເພີ່ມເຕີມເປັນແຕ່ລະໄລຍະ ຊຶ່ງລວມ ທັງໝົດມີ 17 ສະຫາຍ,

3. ສະຫາຍ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່, ແຕ່ບໍ່ມີກົມການເມືອງ ແລະຄະນະເລຂາທິການ, ມີແຕ່ຄະນະປະຈຳຂອງຄະນະບໍລິຫານງານສູນກາງຈຳນວນໜຶ່ງ;

(3). ກອງປະຊຸມໃຫຍ່ ໄດ້ວາງໜ້າທີ່ລວມຂອງພັກ ໃນໄລຍະສະເພາະໜ້າອອກ ຄື: "ນຳພາປວງຊົນລາວ ສາມັກຄີຕໍ່ສູ້ເຮັດສຳເລັດພາລະກິດປົດປ່ອຍຊາດ, ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະວັດທະນາຖາວອນ";

(4). ພັກໄດ້ກຳນົດ 09 ຍຸດທະສາດຕົ້ນຕໍ ຄື :

1. ກຳນົດທາດແທ້ຂອງຕົນ: ພັກຂອງຊົນຊັ້ນກຳມະກອນ ເຊິ່ງເປັນຕົວແທນແກ່ຜົນປະໂຫຍດ ຊົນຊັ້ນກຳມະກອນ, ປະຊາຊົນຜູ້ອອກແຮງງານ ແລະ ໝົດຊາດລາວ,

2. ພື້ນຖານແນວຄິດຂອງພັກ: ທິດສະດີມາກ-ເລນິນ,

3.ກຳນົດຈຸດໝາຍສຸດທ້າຍຂອງການປະຕິວັດ "ເພື່ອກ້າວຂຶ້ນສັງຄົມນິຍົມ",

4. ກຳນົດສັດຕູຕົ້ນຕໍສະເພາະໜ້າ: "ຈັກກະພັດອາເມລິກາຜູ້ແຊກແຊງຮຸກຮານ, ລັດທິລ່າເມືອງຂຶ້ນຝຣັ່ງ ແລະ ລູກມື",

5. ກຳລັງນຳພາຊົນຊັ້ນກຳມະກອນ ໂດຍແມ່ນພັກເປັນຕົວແທນ,

6. ກຳນົດກຳລັງຫລວງຂອງການປະຕິວັດ: ປະຊາຊົນທັງຊາດແມ່ນຊາວໄຮ່ນາຜູ້ອອກແຮງງານລາວບັນດາເຜົ່າ,

7. ກຳນົດເພື່ອນມິດຂອງການປະຕິວັດລາວ: ນັກຮຽນຮູ້, ນັກສຶກສາ, ປັນຍາຊົນ, ພໍ່ຄ້າຊາວຂາຍ, ນາຍທຶນນ້ອຍ, ນາຍທຶນແຫ່ງຊາດ, ພະສົງອົງຄະເຈົ້າ, ຜູ້ຊົງຄຸນວຸດທິເຈົ້າກົກເຈົ້າເຫລົ່າຕ່າງໆ

8. ໜ້າທີ່ພື້ນຖານ: "ສາມັກຄີປວງຊົນທັງຊາດ ດຳເນີນການປະຕິວັດຊາດ ປະຊາທິປະໄຕ, ຕ້ານຈັກກະພັດຜູ້ຮຸກຮານ ແລະ ລູກແຫລ້ງຕີນມື, ປົດປ່ອຍປະເທດຊາດ",

9. ຄຳຂວັນຍຸດທະສາດ: "ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ".

**ກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກ (03 - 06 ກຸມພາ 1972):**

(1). ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ ຈັດຂຶ້ນລະຫວ່າງ ວັນທີ 03 - 06 ກຸມພາ 1972 ຢູ່ທີ່ເມືອງວຽງໄຊ, ແຂວງຫົວພັນ, ມີຜູ້ແທນເຂົ້າຮ່ວມ 125 ສະຫາຍ ທີ່ຕາງໜ້າໃຫ້ສະມາຊິກພັກ 20 ພັນກວ່າສະຫາຍ ໃນທົ່ວປະເທດ:

1. ເລືອກຕັ້ງຄະນະບໍລິຫານງານສູນກາງພັກ 29 ສະຫາຍ, ໃນນັ້ນກຳມະການສົມບູນ 23 ສະຫາຍ ແລະ ສຳຮອງ 16 ສະຫາຍ,

2. ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງປະຖົມມະລຶກ ໄດ້ເລືອກຕັ້ງເອົາກົມການເມືອງສູນກາງພັກ 07 ສະຫາຍ, ເລືອກເອົາ ສະຫາຍ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່ສູນກາງພັກ,

3. ຕົກລົງຈັດຕັ້ງຄະນະເລຂາທິການສູນກາງພັກ, ເລືອກຕັ້ງປະທານກວດກາສູນກາງພັກ; ຕົກລົງປ່ຽນຊື່ "ພັກປະຊາຊົນລາວ" ມາເປັນ "ພັກປະຊາຊົນປະຕິວັດລາວ" ໃນປະຈຸບັນ;

(2). ເນື້ອໃນຕົ້ນຕໍຂອງມະຕິ ແມ່ນ:

1. ສັງລວມຂະບວນວິວັດຂອງການປະຕິວັດ ໃນ 26 ປີທີ່ຜ່ານມາ, ຍົກໃຫ້ເຫັນສາເຫດຂອງໄຊຊະນະ ເຊິ່ງໃນນັ້ນ ການນຳພາອັນຖືກຕ້ອງ ແລະ ສະຫລາດສ່ອງໃສຂອງພັກ ເປັນສາເຫດທີ່ຕັດສິນກວ່າໝູ່,

2. ຖອດຖອນບົດຮຽນຕ່າງໆ ຂອງຂະບວນການປະຕິວັດລາວ ໃນໄລຍະຜ່ານມາ, ພິສູດໃຫ້ເຫັນສັດຈະທຳອັນຍິ່ງໃຫຍ່ຂອງຍຸກສະໄໝ ຄືປະເທດໜຶ່ງໆ ເຖິງວ່ານ້ອຍ, ເສດຖະກິດ, ວັດທະນະທຳ ຂະຫຍາຍຕົວຊ້າ, ແຕ່ມີພັກມາກ-ເລນິນ ທີ່ແທ້ຈິງນຳພາ, ມີແນວທາງການເມືອງ ການທະຫານທີ່ຖືກຕ້ອງ, ມີວິທີປະຕິວັດທີ່ສອດຄ່ອງ, ມີຄວາມສາມັກຄີປວງຊົນທັງຊາດຢ່າງແໜ້ນແຟ້ນ, ມີຄວາມຕັດສິນໃຈຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນ ທັງໄດ້ຮັບການສະໜັບ ສະໜູນຊ່ວຍເຫລືອຢ່າງຕັ້ງໜ້າ ຂອງບັນດາປະເທດສັງຄົມນິຍົມ ແລະ ຂອງຂະບວນການປະຕິວັດໃນໂລກ ແລ້ວປະເທດນັ້ນ ກໍສາມາດຕີຊະນະຈັກກະພັດ ຜູ້ຮຸກຮານທຸກໂຕ, ທັງສາມາດຍາດເອົາ ແລະ ປົກປັກຮັກສາເອກະລາດ ອິດສະຫລະພາບຂອງຊາດຕົນໄວ້ໄດ້,

3. ໂຄງການການເມືອງ ໄດ້ຊີ້ໃຫ້ເຫັນວ່າ ສັງຄົມລາວໃນປັດຈຸບັນ ມີຂໍ້ຂັດແຍ່ງພື້ນຖານສອງຢ່າງ ຄື: ຂໍ້ຂັດແຍ່ງລະຫວ່າງປະຊາຊົນບັນດາເຜົ່າເປັນຕົ້ນ ແມ່ນ ປະຊາຊົນຜູ້ອອກແຮງງານ ກັບກຸ່ມນາຍທຶນຈຳໜ່າຍ, ອາດຍາສິດຂຸນເສິກ ແລະ ຊົນຊັ້ນສັກດີນາ,

4. ຂໍ້ຂັດແຍ່ງທັງສອງຢ່າງນີ້ ມີການພົວພັນ ແລະ ກະທົບເຊິ່ງກັນ ແລະ ກັນ ເຊິ່ງຕ້ອງແກ້ໄຂໄປພ້ອມໆກັນ, ສະເພາະໜ້ານີ້ຕ້ອງສຸມໃສ່ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຊາດລາວ ກັບ ຈັກກະພັດອາເມລິກາ ຜູ້ຮຸກຮານ ແລະ ພວກລູກມືຂາຍຊາດ,

5. ໂຄງການການເມືອງໄດ້ກຳນົດໜ້າທີ່ພື້ນຖານຂອງການປະຕິວັດລາວ ຄື: "ສາມັກຄີປະຊາຊົນບັນດາເຜົ່າ, ໂຄ່ນລົ້ມຈັກກະພັດຜູ້ຮຸກຮານ, ກຸ່ມນາຍທຶນຈຳໜ່າຍ, ອາດຍາສິດຂຸນເສິກ ແລະ ຊົນຊັ້ນສັກດີນາ, ສຳເລັດການປະຕິວັດຊາດ ປະຊາທິປະໄຕ ປະຊາຊົນ ໃນທົ່ວປະເທດ, ກຽມເງື່ອນໄຂທຸກຢ່າງທີ່ຈຳເປັນ ເພື່ອກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວແບບທຶນນິຍົມ, ເຮັດໃຫ້ປະເທດລາວ ກາຍເປັນປະເທດສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນ, ຕັ້ງໜ້າປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອສັນຕິພາບ ເອກະລາດແຫ່ງຊາດ ປະຊາທິປະໄຕ ແລະ ສັງຄົມນິຍົມ ຢູ່ອິນດູຈີນ, ອາຊີອາຄະເນ ແລະ ໃນໂລກ";

(3). ໄດ້ກຳນົດໜ້າທີ່ຕົ້ນຕໍ ແລະຈຸດໝາຍການເມືອງສະເພາະໜ້າຂອງການປະຕິວັດລາວ ຄື :

1. ເຊີດຊູຄັນທຸງປະຕິວັດຊາດ ປະຊາທິປະໄຕ, ເພີ່ມທະວີຄວາມສາມັກຄີປວງຊົນທັງຊາດ, ສາມັກຄີທຸກກຳລັງປະຕິວັດ, ທຸກກຳລັງທີ່ຮັກຊາດ ແລະ ກ້າວໜ້າ, ສາມັກຄີແໜ້ນແຟ້ນກັບປະຊາຊົນຫວຽດນາມ ແລະ ປະຊາຊົນກຳປູເຈຍ,

2.ຕັ້ງໜ້າກໍ່ສ້າງແລະຂະຫຍາຍກຳລັງປະຕິວັດໃນທຸກດ້ານ, ຊຸກຍູ້ການຕໍ່ສູ້ເພື່ອປົກປັກຮັກສາ, ປັບປຸງ ແລະ ເປີດກວ້າງເຂດປົດປ່ອຍ,

3. ເພີ່ມທະວີການເຄື່ອນໄຫວ, ຊຸກຍູ້ຂະບວນການຕໍ່ສູ້ຂອງປະຊາຊົນ ໃນເຂດສັດຕູຄວບຄຸມຊົ່ວຄາວ, ຜາບແພ້ທຸກເລກົນຂອງຈັກກະພັດອາເມລິກາຜູ້ຮຸກຮານ ແລະ ພວກລູກມືຂາຍຊາດ, ເຮັດໃຫ້ປະເທດລາວ ເປັນປະເທດ ສັນຕິພາບ ເອກະລາດ ປະຊາທິປະໄຕ ເປັນກາງ ເອກະພາບ ແລະ ວັດທະນາຖາວອນ,

4. ຕັ້ງໜ້າປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອສັນຕິພາບ ເອກະລາດແຫ່ງຊາດ ປະຊາທິປະໄຕ ແລະ ສັງຄົມນິຍົມ ຢູ່ອິນດູຈີນ, ອາຊີອາຄະເນ ແລະໃນໂລກ;

(4). ສະພາບຕົວຈິງຂອງປະເທດລາວໃນເວລານັ້ນ ແມ່ນມີສອງເຂດ (ເຂດປົດປ່ອຍ ແລະ ເຂດກວດກາຊົ່ວຄາວຂອງສັດຕູ), ໂຄງການ-ການເມືອງຂອງພັກ ໄດ້ວາງໜ້າທີ່ລະອຽດໃຫ້ແຕ່ລະເຂດຢ່າງແທດເໝາະ ເຊັ່ນ :

1. ເຂດປົດປ່ອຍ: ປັບປຸງກ້ອນກຳລັງສາມັກຄີປະຊາຊົນ ບັນດາຊົນຊາດ, ເພີ່ມທະວີກຳລັງປະຕິວັດໃນທຸກດ້ານ, ເດັດດ່ຽວຜາບແພ້ທຸກເລກົນຜູ້ຮຸກຮານຂອງຈັກກະພັດອາເມລິກາຜູ້ຮຸກຮານແລະພວກລູກມືຂາຍຊາດ,

2. ເຂດສັດຕູຄວບຄຸມຊົ່ວຄາວ: ຂົນຂວາຍ, ຈັດຕັ້ງປະຊາຊົນ, ເຕົ້າໂຮມທຸກກຳລັງຂອງຊາດ ແລະ ປະຊາທິປະໄຕ, ຊຸກຍູ້ຂະບວນການຕໍ່ສູ້ຕ້ານຈັກກະພັດອາເມລິກາຜູ້ຮຸກຮານ ແລະ ພວກລູກມືຂາຍຊາດ, ທວງໃຫ້ປົວແປງຊີວິດຄວາມເປັນຢູ່ ແລະ ປະຕິບັດສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ,

3. ກຳລັງປະຕິວັດ ໃນໄລຍະການປະຕິວັດຊາດ ປະຊາທິປະໄຕ ປະຊາຊົນ ແມ່ນ: "ກຳມະກອນ, ຊາວໄຮ່ນາ, ນັກຮຽນຮູ້ປະຕິວັດ, ນາຍທຶນນ້ອຍ, ນາຍທຶນແຫ່ງຊາດ, ຜູ້ຊົງຄຸນວຸດທິ ທີ່ຮັກຊາດ ແລະ ກ້າວໜ້າ",

4. ໃນນັ້ນ, ກຳລັງຕົ້ນຕໍແມ່ນ "ກຳມະກອນ ແລະຊາວໄຮ່ນາຜູ້ອອກແຮງງານ, ພັນທະພາບກຳມະກອນ-ຊາວນາ ເຊິ່ງຢູ່ພາຍໃຕ້ການນຳພາ ຂອງຊົນຊັ້ນກຳມະກອນ ເປັນປັດໃຈຕັດສິນ ແລະ ຮັບປະກັນທຸກໄຊຊະນະຂອງການປະຕິວັດ".

**ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ (27 - 30 ເມສາ 1982):**

(1). ເປັນກອງປະຊຸມເປີດເຜີຍທາງການ ເທື່ອທຳອິດຕໍ່ພາຍໃນ ແລະ ຕ່າງປະເທດ ແລະ ໄດ້ໄຂຂຶ້ນໃນ ວັນທີ 27-30 ເມສາ 1982 ທີ່ນະຄອນຫລວງວຽງຈັນ ແລະ ມີຜູ້ແທນເຂົ້າຮ່ວມ 228 ສະຫາຍ, ທີ່ມາຈາກທຸກຂົງເຂດການເຄື່ອນໄຫວ ແລະ ຈາກທຸກໆແຂວງທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກ 35.000 ສະຫາຍໃນທົ່ວປະເທດ, ມີແຂກພາຍໃນປະເທດ 105 ສະຫາຍ, ແຂກຕ່າງປະເທດ 11 ຄະນະ;

(2). ກອງປະຊຸມໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງພັກ 55 ສະຫາຍ, ໃນນັ້ນກຳມະການສົມບູນ ມີ 49 ສະຫາຍ ແລະ ສຳຮອງ 06 ສະຫາຍ, ສະຫາຍ ໄກສອນ ພົມວິຫານ ໄດ້ຖືກເລືອກຕັ້ງໃຫ້ເປັນເລຂາທິການໃຫຍ່ສູນກາງພັກເປັນສະໄໝທີ03, ເລືອກຕັ້ງກຳມະການກົມການເມືອງສູນກາງພັກ ປະກອບມີ 07 ສະຫາຍ ແລະ ຄະນະເລຂາທິການສູນກາງພັກ ປະກອບມີ 19 ສະຫາຍ;

(3). ສັງລວມໂດຍຫຍໍ້ເນື້ອໃນ ຂອງກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ:

1. ສະຫລຸບສັງລວມໄຊຊະນະຂອງການປະຕິວັດຊາດປະຊາທິປະໄຕ ແລະ ຜົນງານທີ່ຍາດມາໄດ້ ໃນ 06 ປີ ແຫ່ງການກໍ່ສ້າງລະບອບໃໝ່,

2. ກຳນົດແນວທາງ, ທິດທາງໜ້າທີ່ຂອງການປະຕິວັດໃນໄລຍະໃໝ່, ໄລຍະແຫ່ງການ ປົກປັກຮັກສາເອກະລາດແຫ່ງຊາດ ແລະ ຂ້າມຜ່ານກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ;

(4). ຍົກໃຫ້ເຫັນ 03 ຈຸດພິເສດໃຫຍ່ຂອງການປະຕິວັດລາວ ໃນໄລຍະໃໝ່ຄື:

1. ປະເທດລາວ ພ້ອມກັບຫວຽດນາມ ແລະ ກຳປູເຈຍ ໄດ້ກາຍເປັນປ້ອມດ່ານໜ້າຂອງລະບົບສັງຄົມນິຍົມ ຢູ່ໃນອາຊີອາຄະເນ, ດ້ວຍເຫດນັ້ນ ການຕໍ່ສູ້ ປົກປັກຮັກສາເອກະລາດ ອະທິປະໄຕ ແລະ ກໍ່ສ້າງລະບອບໃໝ່ ແມ່ນດຸເດືອດຂ້ຽວຂາດ ແລະ ຍາວນານ,

2. ປະເທດລາວໄດ້ສະຖາປານາລະບອບການເມືອງທີ່ກ້າວໜ້າຂຶ້ນ, ປະຊາຊົນລາວບັນດາເຜົ່າ ໄດ້ເປັນເຈົ້າປະເທດຊາດ, ມີຊັບພະຍາກອນທີ່ອຸດົມສົມບູນ, ແຕ່ເສດຖະກິດຍັງດ້ອຍພັດທະນາ, ລະດັບວັດທະນະທຳຍັງຕ່ຳ,

3. ປະເທດລາວກ້າວເຂົ້າສູ່ໄລຍະໃໝ່ຂອງການປະຕິວັດໃນຂະນະທີ່ການປະຕິວັດວິທະຍາສາດ-ເຕັກນິກ ຄັ້ງທີ່ 03 ໃນໂລກພວມຂະຫຍາຍຕົວຢ່າງຟົດຟື້ນ ແລະ ກວ້າງຂວາງ,

(5). ກຳນົດແນວທາງລວມຂອງການປະຕິວັດລາວ ໃນສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ຄື:

1. ເຕົ້າໂຮມຄວາມສາມັກຄີປວງຊົນທັງຊາດ ແລະ ນຳພາປະຊາຊົນບັນດາເຜົ່າປັບປຸງ ແລະ ເພີ່ມທະວີຜະເດັດການກຳມະຊີບຢ່າງບໍ່ຢຸດຢັ້ງ, ຈັດຕັ້ງ ແລະ ຮັບປະກັນໃຫ້ປະຊາຊົນຜູ້ອອກແຮງງານເຜົ່າຕ່າງໆ ສາມັກຄີແໜ້ນແຟ້ນ ແລະ ເສີມຂະຫຍາຍສິດເປັນເຈົ້າປະເທດຊາດ, ເປັນເຈົ້າສັງຄົມ,

2. ດຳເນີນການປະຕິວັດ ທັງສາມປະການໄປພ້ອມໆກັນ, ໃນນັ້ນ ການປະຕິວັດການພົວພັນແຫ່ງການຜະລິດ ມີລັກສະນະໄຂຊ່ອງທາງໃຫ້ກຳລັງການຜະລິດ ຂະຫຍາຍຕົວ, ການປະຕິວັດວິທະຍາສາດ-ເຕັກນິກ ເປັນຂໍກຸນແຈຕົ້ນຕໍ, ການປະຕິວັດວັດທະນະທຳແນວຄິດ ຕ້ອງໄປກ່ອນກ້າວໜຶ່ງ, ທັງໝົດເຫລົ່ານັ້ນ ແມ່ນເພື່ອກໍ່ສ້າງສັງຄົມນິຍົມ ຢູ່ປະເທດເຮົາ,

3. ກ່ຽວກັບວຽກງານພັກ: ອອກແຮງກໍ່ສ້າງພັກໃຫ້ເຂັ້ມແຂງຮອບດ້ານ, ຍົກສູງລັກສະນະຊົນຊັ້ນກຳມະກອນ ແລະ ລັກສະນະນຳໜ້າຕໍ່ສູ້, ຍົກສູງຄວາມສາມາດຂອງພັກເພື່ອກ້າວໄປຕາມວັດຖຸປະສົງ ແລະ ເປົ້າໝາຍ ທີ່ພັກໄດ້ ກຳນົດໄວ້,

4. ຂຸດຄົ້ນ ແລະ ເສີມຂະຫຍາຍທຸກຄວາມອາດສາມາດບົ່ມຊ້ອນ ຂອງປະເທດຊາດ, ໂດຍຫັນຈາກກະສິກຳ-ປ່າໄມ້, ເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກຳ,

5. ດັດສ້າງເສດຖະກິດທຳມະຊາດ, ນຳເອົາການຜະລິດນ້ອຍກ້າວສູ່ການຜະລິດໃຫຍ່ສັງຄົມນິຍົມເທື່ອລະກ້າວ,

ອ່ານຕໍ່ໜ້າ 8

## ກອງປະຊຸມຄັ້ງທີ I-XI...

(ຕໍ່ຈາກໜ້າ 7)

6.ປະຕິບັດການຫັນເປັນອຸດສາຫະກຳເທື່ອລະກ້າວ ຢ່າງມີຈຸດໜັກ, ຖືເອົາການຫັນເປັນອຸດສາຫະກຳສັງຄົມນິຍົມ ເປັນໜ້າທີ່ໃຈກາງຂອງສະໄໝຂ້າມຜ່ານ,

7. ສ້າງຊີວິດອັນອີ່ມໜຳສຳລານ ແລະ ສົມບູນພູນສຸກເບີກບານມ່ວນຊື່ນໃຫ້ແກ່ປະຊາຊົນເຜົ່າຕ່າງໆ, ລົບລ້າງລະບອບຄົນຂູດຮີດຄົນຢ່າງຕະຫລອດການ,

8. ເພີ່ມທະວີການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປົກປັກຮັກສາເອກະລາດແຫ່ງຊາດ, ອະທິປະໄຕ ແລະ ລະບອບໃໝ່ໄວ້ຢ່າງໝັ້ນຄົງ, ກໍ່ສ້າງປະເທດລາວ ສັນຕິພາບ ເອກະລາດ ເອກະພາບ ແລະ ສັງຄົມນິຍົມ,

9. ພ້ອມກັບຫວຽດນາມ ແລະ ກຳປູເຈຍ ປົກປັກຮັກສາປ້ອມດ່ານໜ້າສັງຄົມນິຍົມ ຢູ່ພາກພື້ນນີ້ ໃຫ້ໝັ້ນຄົງ ແລະ ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມໃນໂລກ.

(6). ກອງປະຊຸມໄດ້ວາງຈຸດໝາຍພື້ນຖານຂອງການປະຕິວັດລາວ ໃນໄລຍະໃໝ່ ຄື:

1. ບໍ່ລົດລະໃນການເພີ່ມທະວີ ແລະ ບູລະນະລະບົບຜະເດັດການກຳມະຊີບ, ປະຕິບັດສິດເປັນເຈົ້າຂອງ ປະຊາຊົນຜູ້ອອກແຮງງານເຜົ່າຕ່າງໆ,

2. ກໍ່ສ້າງພື້ນຖານວັດຖຸ-ເຕັກນິກອັນຈຳເປັນຂອງລະບອບສັງຄົມນິຍົມ, ເຮັດໃຫ້ເສດຖະກິດແຫ່ງຊາດມີພື້ນຖານກະສິກຳ-ປ່າໄມ້, ອຸດສາຫະກຳຂະຫຍາຍຕົວ,

3. ກໍ່ສ້າງ ແລະ ບູລະນະການພົວພັນແຫ່ງການຜະລິດສັງຄົມນິຍົມ, ຮັບປະກັນໃຫ້ບັນດາພາກສ່ວນເສດຖະກິດສັງຄົມນິຍົມກວມຖານະຄອບຄອງໃນພື້ນຖານເສດຖະກິດແຫ່ງຊາດ,

4. ກໍ່ສ້າງ ແລະ ບຳລຸງພະນັກງານ, ກຳມະກອນ ເພື່ອໃຫ້ມີຄວາມສາມາດພຽງພໍ ໃນການສ້າງສາພັດທະນາ ແລະ ເປັນເຈົ້າປະເທດຊາດ, ເປັນເຈົ້າສັງຄົມ,

5. ສາມັກຄີປະຊາຊົນເຜົ່າຕ່າງໆ, ສູ້ຊົນນຳເອົາເຜົ່າຕ່າງໆກ້າວຂຶ້ນທຽມທັນກັນ, ປອງດອງກັນຢ່າງແທ້ຈິງຢູ່ໃນວົງຄະນາຍາດຂອງຊາດລາວ, ເຮັດໃຫ້ຊີວິດການ ເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນ ແຕ່ລະເຜົ່າໃຫ້ດີຂຶ້ນ.

**ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ (13-15 ພະຈິກ 1986):**

(1). ກອງປະຊຸມແຫ່ງການປ່ຽນແປງໃໝ່ຮອບດ້ານຢ່າງມີຫລັກການ, ໄດ້ໄຂຂຶ້ນ ແຕ່ວັນທີ 13-15 ພະຈິກ 1986, ທີ່ ນະຄອນຫລວງວຽງຈັນ, ມີຈຳນວນຜູ້ແທນສົມບູນເຂົ້າຮ່ວມ 303 ສະຫາຍ (ເປັນຕົວແທນໃຫ້ແກ່ສະມາຊິກພັກ 45.000 ກວ່າສະຫາຍໃນທົ່ວປະເທດ) ແລະ ແຂກຖືກເຊີນພາຍໃນມີ 200 ສະຫາຍ;

(2). ເລືອກຕັ້ງຄະນະບໍລິຫານງານສູນກາງພັກ 60 ສະຫາຍ, ໃນນັ້ນກຳມະການສົມບູນ 51 ສະຫາຍ ແລະ ສຳຮອງ 09 ສະຫາຍ, ກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສູນກາງພັກໄດ້ເລືອກເອົາສະຫາຍ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່ສູນກາງພັກ ສະໄໝທີ 04, ເລືອກຕັ້ງກົມການເມືອງ ສົມບູນ 11 ສະຫາຍ, ສຳຮອງ 02 ສະຫາຍ ແລະ ເລືອກຕັ້ງຄະນະເລຂາທິການ 09 ສະຫາຍ;

(3). ເນື້ອໃນຫຍໍ້ຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ: ຜ່ານພຶດຕິກຳ 10 ປີ (1975-1985) ແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດ

ກອງປະຊຸມໃຫຍ່ຖອດຖອນໄດ້ 05 ບົດຮຽນທີ່ສຳຄັນ ຄື:

1. ເພີ່ມທະວີການນຳພາຮອບດ້ານຂອງພັກ, ວາງແນວທາງອອກຢ່າງທັນການ ແລະ ບູລະນະມັນ ຢ່າງບໍ່ຢຸດຢັ້ງ, ທັງຢຶດໝັ້ນໃນການຈັດຕັ້ງປະຕິບັດແນວທາງ ໃຫ້ປະກົດເປັນຈິງ,

2. ເພີ່ມທະວີຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນ ເປັນສາເຫດອັນສຳຄັນຍິ່ງແຫ່ງໄຊຊະນະທຸກຢ່າງ ຂອງການປະຕິວັດປະເທດເຮົາ.

3. ຕ້ອງຕິດແໜ້ນກັບຮາກຖານ, ສຸມໃສ່ກໍ່ສ້າງຮາກຖານໃຫ້ໜັກແໜ້ນເຂັ້ມແຂງໃນທຸກດ້ານ ເພື່ອປະຕິບັດສອງໜ້າທີ່ຍຸດທະສາດເປັນຢ່າງດີແລະດຳເນີນການປະຕິວັດ3ປະການໄປພ້ອມໆກັນ.

4. ໃນທຸກການເຄື່ອນໄຫວດ້ານເສດຖະກິດ ຕ້ອງຮູ້ໝູນໃຊ້ບັນດາກົດເກນພາວະວິໄສ ແລະ ຄິດໄລ່ປະສິດທິຜົນທາງເສດຖະກິດ-ສັງຄົມ.

5. ການຮ່ວມມືຮອບດ້ານ ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ, ກ່ອນອື່ນໝົດແມ່ນສະຫະພາບໂຊວຽດ, ກໍ່ສ້າງກ້ອນກຳລັງຮ່ວມສຳພັນພິເສດ ລະຫວ່າງ ປະເທດເຮົາກັບຫວຽດນາມ ແລະ ກຳປູເຈຍ, ນຳໃຊ້ບັນດາ ເງື່ອນໄຂອັນສະດວກຂອງຍຸກສະໄໝ ເປັນປັດໄຈທີ່ຂາດບໍ່ໄດ້ ໃນການກໍ່ສ້າງສັງຄົມນິຍົມ ຢູ່ປະເທດເຮົາ.

(4). ກຳນົດທິດທາງ ໜ້າທີ່ຕົ້ນຕໍທາງດ້ານເສດຖະກິດ-ສັງຄົມ ຕະຫລອດສະໄໝຂ້າມຜ່ານກ້າວຂຶ້ນສູ່ ສັງຄົມນິຍົມ ຂອງປະເທດເຮົາ ຄື:

1. ດຳເນີນການຫັນເປັນອຸດສາຫະກຳ ສັງຄົມນິຍົມ ເທື່ອລະກ້າວ ເພື່ອກໍ່ສ້າງພື້ນຖານວັດຖຸເຕັກນິກສັງຄົມນິຍົມໃຫ້ສຳເລັດຜົນ,

2. ດຳເນີນການດັດສ້າງສັງຄົມນິຍົມ ເພື່ອກໍ່ສ້າງການພົວພັນການຜະລິດໃໝ່ ສັງຄົມນິຍົມ,

3. ຂະຫຍາຍທາງດ້ານຈຳນວນ ແລະ ຍົກສູງຄຸນນະພາບຂອງຊົນຊັ້ນກຳມະກອນ, ເຮັດໃຫ້ຊົນຊັ້ນຊາວນາລວມໝູ່ ແລະ ຊັ້ນຄົນປັນຍາຊົນສັງຄົມນິຍົມ ເປັນຕົນ ເປັນໂຕຂຶ້ນ,

4. ປັບປຸງລະບົບຜະເດັດການກຳມະຊີບໃຫ້ໜັກແໜ້ນ, ເປີດກວ້າງປະຊາທິປະໄຕສັງຄົມນິຍົມ, ເພີ່ມທະວີຄວາມເປັນເອກະພາບທາງດ້ານການເມືອງ ແລະ ແນວຄິດ ຂອງສັງຄົມ,

5. ດຳເນີນການປະຕິວັດແນວຄິດ ແລະວັດທະນະທຳ ແນໃສ່ກໍ່ສ້າງວັດທະນະທຳໃໝ່ ແລະ ຄົນໃໝ່ ສັງຄົມນິຍົມ ເທື່ອລະກ້າວ,

6. ປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າໃຫ້ດີຂຶ້ນ ແລະ ແກ້ໄຂບັນດາບັນຫາສັງຄົມຢ່າງເໝາະສົມ,

7. ກໍ່ສ້າງລະບົບຄຸ້ມຄອງໃໝ່ ຕໍ່ຂົງເຂດເຄື່ອນໄຫວສັງຄົມ.

(5). ທິດທາງ ໜ້າທີ່ຕົ້ນຕໍ ໄລຍະແຕ່ນີ້ເຖິງປີ 2000 ກໍຄືແຜນການ 05 ປີເທື່ອທີ II ຄື:

1. ເລັ່ງໃສ່ແກ້ໄຂບັນຫາທັນຍາຫານ ແລະ ອາຫານ ໃຫ້ໄດ້ຢ່າງໜັກແໜ້ນ ບົນພື້ນຖານຂະຫຍາຍການກະສິກຳຢ່າງຮອບດ້ານ,

2. ຈຳກັດ ແລະ ໄປເຖິງບ່ອນຢຸດຕິການຖາງປ່າເຮັດໄຮ່ໂດຍພື້ນຖານ,

3. ສ້າງໂຄງປະກອບເສດຖະກິດກະສິກຳ-ປ່າໄມ້-ອຸດສາຫະກຳ ທີ່ສົມເຫດສົມຜົນ ໃຫ້ເປັນຕົນເປັນໂຕຂຶ້ນ ໃນຂັ້ນຕົ້ນ

4. ດຳເນີນການແບ່ງເຂດເສດຖະກິດ, ວາງແຜນກຳນົດ ກ່ຽວກັບການກໍ່ສ້າງຊົນນະບົດ ແລະ ຕົວເມືອງ,

5. ຂະຫຍາຍການຄົມມະນາຄົມຂົນສົ່ງ ແລະ ການຕິດຕໍ່ສື່ສານ,

6. ນຳໃຊ້ຄວາມກ້າວໜ້າດ້ານວິທະຍາສາດເຕັກນິກ, ຈັດຕັ້ງວຽກງານສຳຫລວດພື້ນຖານ,

7. ປັບປຸງ ແລະ ເພີ່ມທະວີບົດບາດເປັນເຈົ້າພາທາງ ໃນຂົງເຂດເສດຖະກິດຂອງລັດ, ຂະຫຍາຍຂົງເຂດເສດຖະກິດສະຫະກອນ,

8. ປັບປຸງແລະຂະຫຍາຍລະບົບການຄ້າຢ່າງຮອບດ້ານ,

9. ອອກແຮງປັບປຸງດ້ານການເງິນ ແລະເງິນຕາ ໃຫ້ສະຫງົບປົກກະຕິ,

10. ຂະຫຍາຍການພົວພັນດ້ານເສດຖະກິດກັບຕ່າງປະເທດ,

11. ກໍ່ສ້າງລະບົບກົດໝາຍ,

12. ຂະຫຍາຍການສຶກສາ, ວັດທະນະທຳ ແລະ ສາທາລະນະສຸກ,

13. ໜ້າທີ່ວຽກງານກໍ່ສ້າງພັກ:

- ເພີ່ມທະວີບົດບາດ ແຫ່ງການນຳພາຂອງພັກ, ເຊີດຊູຄຸນປະໂຫຍດ ແລະ ປະສິດທິຜົນ ແຫ່ງການນຳພາ ແລະ ກຳລັງສູ້ຮົບຂອງພັກ ຢູ່ໃນໄລຍະໃໝ່ ຂອງການ ປະຕິວັດ.
- ບູລະນະບັນດາອົງການຈັດຕັ້ງນຳພາ ແລະ ຄຸ້ມຄອງ, ເຊີດຊູກຳລັງສູ້ຮົບຂອງການຈັດຕັ້ງຮາກຖານ.
- ດັດແປງວຽກງານພະນັກງານ, ເສີມຂະຫຍາຍບົດບາດນຳໜ້າ ເປັນແບບຢ່າງຂອງສະມາຊິກພັກ.
- ສ້າງແບບແຜນເຮັດວຽກແບບໃໝ່, ຮັກສາບັນດາຫລັກການຈັດຕັ້ງ ແລະ ດຳເນີນຊີວິດຢູ່ໃນພັກຢ່າງເຂັ້ມງວດ.
- ເພີ່ມທະວີວຽກງານແນວຄິດ ແລະ ທິດສະດີຢ່າງແຂງແຮງແນໃສ່ຮັບເອົາຈິດສຳນຶກໃໝ່ ແລະ ຈິນຕະນາການໃໝ່.

**ກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ (ວັນທີ 27-29 ມີນາ 1991):**

(1). ເປັນກອງປະຊຸມທີ່ເຮັດໃຫ້ແນວທາງປ່ຽນແປງໃໝ່ກາຍເປັນອັນສົມບູນກວ່າເກົ່າ, ດຳເນີນລະຫວ່າງວັນທີ 27 -29 ມີນາ 1991, ທີ່ ນະຄອນຫລວງວຽງຈັນ, ມີຜູ້ແທນສົມບູນເຂົ້າຮ່ວມ 367 ສະຫາຍ ທີ່ມາຈາກຂະແໜງການ ທ້ອງຖິ່ນ ແລະ ຮາກຖານຕ່າງໆ ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກພັກ ຈຳນວນ 60.000 ສະຫາຍ ໃນທົ່ວປະເທດ;

(2). ກອງປະຊຸມໄດ້ເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ 59 ສະຫາຍ, ໃນນັ້ນ ສຳຮອງ 04 ສະຫາຍ:

1. ມີການປ່ຽນແປງແນວທາງການຈັດຕັ້ງຈຳນວນໜຶ່ງ, ເປັນຕົ້ນ ປ່ຽນຈາກເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກມາເປັນປະທານຄະນະບໍລິຫານງານສູນກາງພັກ ໂດຍໄດ້ເລືອກເອົາສະຫາຍ ໄກສອນ ພົມວິຫານ ເປັນປະທານ,

2. ເລືອກຕັ້ງເອົາກົມການເມືອງ 11 ສະຫາຍ, ສ່ວນຄະນະເລຂາທິການນັ້ນ ເນື່ອງຈາກວ່າບໍ່ມີເລຂາທິການໃຫຍ່ຈຶ່ງບໍ່ຈຳເປັນມີຄະນະເລຂາອີກ, ແຕ່ໄດ້ເລືອກຕັ້ງເອົາສະຫາຍ ປະທານຄະນະບໍລິຫານງານສູນກາງພັກ ເປັນຜູ້ປະຈຳການຂອງຄະນະບໍລິຫານງານສູນກາງພັກ;

(3). ເນື້ອໃນຫຍໍ້ຂອງມະຕິ, ກອງປະຊຸມໄດ້ກຳນົດລັກສະນະ ແລະ ໄລຍະຂອງການປະຕິວັດປະເທດເຮົາ ໃນໄລຍະປັດຈຸບັນວ່າ “ແມ່ນໄລຍະແຫ່ງການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ, ສ້າງຖະຖົມປັດໄຈກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ”;

(4). ທິດທາງໜ້າທີ່ລວມ:

1. ສືບຕໍ່ສ້າງພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ, ເພີ່ມທະວີຄວາມສາມັກຄີເປັນອັນໜຶ່ງ ອັນດຽວຂອງປວງຊົນລາວທັງຊາດ ບົນພື້ນຖານພັນທະພາບກຳມະກອນ-ກະສິກອນ ແລະ ປັນຍາຊົນ ນັກຮຽນຮູ້ ພາຍໃຕ້ການນຳພາຂອງພັກ,

2. ຕັ້ງໜ້າສົ່ງເສີມເສດຖະກິດຫລາຍພາກສ່ວນ ແນໃສ່ຂະຫຍາຍກຳລັງການຜະລິດ ຢ່າງແຂງແຮງ, ຫັນປ່ຽນເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ ໄປສູ່ເສດຖະກິດສິນຄ້າ, ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນເຜົ່າຕ່າງໆ ນັບມື້ນັບດີຂຶ້ນ,

3. ເສີມຂະຫຍາຍປະຊາທິປະໄຕ ໃນທຸກຂົງເຂດຊີວິດສັງຄົມ, ເຊີດຊູບົດບາດຂອງບັນດາອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ,

4. ກໍ່ສ້າງກົງຈັກລັດໃຫ້ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ ທີ່ເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍ,

5. ເພີ່ມທະວີບົດບາດ ການນຳພາຂອງພັກ ໃນລະບົບການເມືອງຢ່າງບໍ່ຢຸດຢັ້ງ,

6. ປັບປຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ, ປົກປັກຮັກສາເອກະລາດ, ອະທິປະໄຕຂອງຊາດ ແລະ ລະບອບໃໝ່ໄວ້ໃຫ້ໝັ້ນຄົງ, ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນທົ່ວສັງຄົມ,

7. ສືບຕໍ່ເປີດກວ້າງການພົວພັນ ແລະ ການຮ່ວມມືກັບນາໆປະເທດ ແລະ ບັນດາອົງການຈັດຕັ້ງສາກົນ;

ທັງໝົດເຫລົ່ານັ້ນ ເພື່ອສ້າງປະເທດລາວ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ, ປະກອບສ່ວນເຂົ້າໃນພາລະກິດ ການຕໍ່ສູ້ເພື່ອສັນຕິພາບ ເອກະລາດແຫ່ງຊາດ ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມໃນໂລກ;

(5). ກຳນົດທັດສະນະພື້ນຖານ ກ່ຽວກັບການປ່ຽນແປງໃໝ່ລະບົບການເມືອງ, ເຊິ່ງການປ່ຽນແປງໃໝ່ລະບົບການເມືອງຢູ່ປະເທດເຮົາ “ບໍ່ໝາຍຄວາມວ່າ ຕ້ອງປ່ຽນແປງຈາກລະບອບການເມືອງນີ້ ດ້ວຍລະບອບການເມືອງອື່ນ, ແຕ່ຫາກແມ່ນການບູລະນະການຈັດຕັ້ງ ຂອງລະບົບການເມືອງປະຊາທິປະໄຕ ປະຊາຊົນ ແລະ ປ່ຽນແປງໃໝ່ແບບວິທີເຄື່ອນໄຫວຂອງມັນບົນພື້ນຖານການກຳນົດພາລະບົດບາດ, ໜ້າທີ່ຂອງແຕ່ລະອົງປະກອບໃຫ້ຈະແຈ້ງ”,

(6). ທິດນຳຂອງການປ່ຽນແປງໃໝ່ລະບົບການເມືອງ ຄື:

1. ຮັບປະກັນລັກສະນະສືບທອດ ແລະ ຂະຫຍາຍຕົວ, ຕ້ານແນວຄິດຮັກສາເດີມ ແລະ ທ່າອ່ຽງ ປະຕິເສດ ຢ່າງສິ້ນເຊີງ ບັນດາຜົນງານທີ່ຍາດມາໄດ້,

2. ດຳເນີນໄປເປັນແຕ່ລະບາດກ້າວດ້ວຍຄວາມຮອບຄອບ, ໜັກແໜ້ນ, ບໍ່ສ້າງຄວາມກະທົບກະເທືອນທີ່ຮ້າຍແຮງດ້ານສັງຄົມ ແລະ ຈິດຕະສາດ, ຮັບປະກັນສະຖຽນລະພາບ ຂອງປະເທດຊາດ,

3. ດຳເນີນໄປຢ່າງຄົບຊຸດ ມີການປະສານສົມທົບຢ່າງກົມກຽວ ລະຫວ່າງ ການປ່ຽນແປງໃໝ່ ໃນຂົງເຂດຕ່າງໆດ້ວຍກັນ,

4. ເຊີດຊູຄຸນນະພາບ ແລະ ກຳລັງແຮງໃໝ່ໃຫ້ທຸກອົງການຈັດຕັ້ງ.

ອ່ານຕໍ່ໜ້າ 9



## ສພຊ...

(ຕໍ່ຈາກໜ້າ 1)

ໃນການພັດທະນາຕົນເອງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີແບບແຜນດຳລົງຊີວິດທີ່ປອດໃສ ແລະ ມີແບບແຜນວິທີເຮັດວຽກທີ່ຖືກຕ້ອງ. ການເປີດຊຸດຮຽນທິດສະດີຂັ້ນຕົ້ນໃນຄັ້ງນີ້ ຍັງຕິດພັນກັບແຜນການບຳລຸງສ້າງພະນັກງານນຳພາ-ຄຸ້ມຄອງຂອງ ສພຊ ໃນໄລຍະປັດຈຸບັນ ແລະ ຊຸມປີຕໍ່ໜ້າ ທັງເປັນການກະກຽມໃຫ້ແກ່ການປັບປຸງກົງຈັກການຈັດຕັ້ງສະພາແຫ່ງຊາດໃນຕໍ່ໜ້າ.

ໃນພິທີເປີດ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ໂດຍເນັ້ນໜັກໃຫ້ສະມາຊິກພັກ-ພະນັກງານ ຕ້ອງໄດ້ຮຽນຮູ້, ເຝິກຝົນ ຫຼໍ່ຫຼອມຕົນເອງດ້ວຍທິດສະດີປະຕິວັດ ນັ້ນຄືທິດສະດີມາກ-ເລນິນ, ແນວທາງນະໂຍບາຍຂອງພັກ-ລັດ ເພື່ອຍົກສູງຄວາມສາມາດນຳພາຂອງພັກ, ເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ການງານ, ມີຄວາມສາມັກຄີປຸ້ມລຸມກັນ, ມີສະຕິຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງພວກກຳລັງປໍລະປັກທີ່ຍາມໃດກໍຫວັງຢາກທຳລາຍລະບອບໃໝ່ຂອງພວກເຮົາ. ເປັນໂອກາດທີ່ດີໃຫ້ແກ່ພະນັກງານສະມາຊິກພັກໜຸ່ມນ້ອຍ ໄດ້ຮຽນຮູ້ບັນດາຫຼັກມູນພື້ນຖານຂອງທິດສະດີມາກ-ເລນິນ, ເປັນໂອກາດເຝິກຝົນຄຸນສົມບັດສິນທຳປະຕິວັດເຊິ່ງແມ່ນມາດຕະຖານໜຶ່ງຂອງພະນັກງານໃນລະບອບໃໝ່ທີ່ມີພັກປະຊາຊົນປະຕິວັດລາວ ເປັນແກນນຳໃນລະບົບການເມືອງຂອງປະເທດເຮົາ; ເປັນໂອກາດໄດ້ຮຽນຮູ້ກ່ຽວກັບຄຸນສົມບັດສິນທຳປະຕິວັດທີ່ສະແດງອອກຫຼາຍດ້ານ: ດ້ານແບບແຜນການດຳລົງຊີວິດ, ແບບແຜນວິທີເຮັດວຽກ, ໃນການພັດທະນາຕົນເອງ, ໃນການສ້າງ ແລະ ເສີມຂະຫຍາຍຄວາມສາມັກຄີພາຍໃນ, ຄວາມຈົງຮັກພັກດີຕໍ່ຊາດຕໍ່ປະຊາຊົນ, ການມີນ້ຳໃຈເສຍສະຫຼະເພື່ອຜົນປະໂຫຍດລວມຂອງປະເທດຊາດ.

ສະຫາຍຮອງເລຂາ, ຮອງປະທານສະພາແຫ່ງຊາດ ຍັງໄດ້ຮຽກຮ້ອງໃຫ້ບັນດາສຳມະນາກອນ ຈົ່ງໃຊ້ເວລາເປັນປະໂຫຍດເພື່ອຊອກຮູ້ເອົາຄວາມຮູ້ໃໝ່ໆ, ຕັ້ງອົກຕັ້ງໃຈຟັງຄູອາຈານສອນໃນຫ້ອງ, ຄົ້ນຄວ້າ ແລະ ສົນທະນານຳໝູ່ເພື່ອນເວລາຢູ່ນອກຫ້ອງຮຽນ ເພາະຈະມີການຂຽນໃບເກັບກ່ຽວຄວາມຮູ້ທີ່ໄດ້ຮຽນມາ ແລະ ຍັງໄດ້ສະເໜີ ໃຫ້ມີການເຄື່ອນໄຫວຊີວິດການເມືອງພາຍໃນໜ່ວຍພັກຢ່າງປົກກະຕິ.

ຊຸດຮຽນທິດສະດີການເມືອງຂັ້ນຕົ້ນຄັ້ງນີ້ ຈະແກ່ຍາວຮອດເດືອນພຶດສະພາ 2025 ເຊິ່ງຈະໄດ້ຄົ້ນຄວ້າຮ່ຳຮຽນ 6 ກຸ່ມວິຊາຄື: ປັດຊະຍາມາກ-ເລນິນ, ເສດຖະສາດການເມືອງມາກ-ເລນິນ, ລັດທິສັງຄົມນິຍົມວິທະຍາສາດ, ແນວຄິດ ໄກສອນ ພົມວິຫານ, ທິດສະດີລັດ ແລະ ກົດໝາຍ, ປະຫວັດສາດພັກ ແລະ ກໍ່ສ້າງພັກ.

**(ນາງ ໄຊໃສພາພອນ ມິ່ງມຸງຄຸນ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ເປີດ ໂດຍໄດ້ເນັ້ນໜັກບາງຕອນວ່າ: ກຳມາທິການວຽກງານສະມາຊິກລັດຖະສະພາ (CAP) ຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ເຊິ່ງເປັນໜຶ່ງໃນ 4 ຄະນະກຳມາທິການປະຈຳຂອງ APF ທີ່ເປັນຕົວແທນແຫ່ງສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊາດໃນປະເທດຝຣັ່ງໂກໂຟນີ, ໄດ້ຕີລາຄາສູງຕໍ່ບົດບາດໜ້າທີ່ຂອງກຳມາທິການໃນການພິຈາລະນາບັນຫາທີ່ກ່ຽວຂ້ອງກັບກົດໝາຍ, ຕິດຕາມກວດກາ ແລະ ປະເມີນນະໂຍບາຍສາທາລະນະ, ຄວາມຮັບຜິດຊອບວຽກງານການຈັດຕັ້ງລັດຖະສະພາ, ການຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມຕໍ່ນະໂຍບາຍຂອງສັງຄົມ, ຍົກໃຫ້ເຫັນຄວາມຈຳເປັນໃນການເພີ່ມທະວີບົດບາດ ແລະ ໜ້າທີ່ຂອງຕົນໃນການຕິດຕາມຢ່າງໃກ້ຊິດ ເພື່ອຮັບມື ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນສັງຄົມພ້ອມທັງສົ່ງເສີມຂີດຄວາມສາມາດໃນການແຂ່ງຂັນໃນທຸກຂົງເຂດວຽກງານ ເພື່ອຮັບປະກັນການພັດທະນາແບບຍືນຍົງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນບັນດາປະເທດຝຣັ່ງໂກໂຟນີ ໃຫ້ມີຄວາມສົມບູນພູນສຸກຂຶ້ນເລື້ອຍໆ. ກອງປະຊຸມນີ້ເປັນເວທີແຫ່ງການຄົ້ນຄວ້າປຶກສາຫາລື, ແລກປ່ຽນຂໍ້ມູນ, ຄຳຄິດເຫັນຮ່ວມກັນ ເພື່ອກຽມພ້ອມຮັບມື ແລະ ປ້ອງກັນບັນຫາຕ່າງໆທີ່ອາດຈະເກີດຂຶ້ນ ເນື່ອງຈາກການຜັນແປຢ່າງວ່ອງໄວຂອງສະພາບການຂອງໂລກ ແລະ ພາກພື້ນຕ່າງໆ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຕີລາຄາການເຄື່ອນໄຫວຂອງສະພາແຫ່ງຊາດລາວ ທີ່ເຂົ້າເປັນສະມາຊິກ ແລະ ຮ່ວມເຄື່ອນໄຫວໃນອົງການສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ນັບແຕ່ປີ 1996 ເປັນຕົ້ນມາ ໄດ້ມີການຮ່ວມມືກັບ APF ໂດຍໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອພັດທະນາ ຕາມແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ຂອງ ສປປລາວ. ນອກຈາກນີ້, ສະພາແຫ່ງຊາດລາວ ຍັງໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມ ແລະ ສຳມະນາພາຍໃຕ້ຫົວຂໍ້ຕ່າງໆໃນຂອບຂອງອົງການ APF ຈຳນວນ 5 ຄັ້ງ, ຍັງໄດ້ສົ່ງພະນັກງານທີ່ຮັບຜິດຊອບວຽກງານຝຣັ່ງໂກໂຟນີ ໄປເຂົ້າຮ່ວມເຝິກອົບຮົມ ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ລັດຖະສະພາຊາວໜຸ່ມຂອງ APF ພາຍໃຕ້ໂຄງການສະໜອງທຶນການຮ່ວມມືຂອງ APF ເຊິ່ງຖືວ່າການຊ່ວຍເຫຼືອດັ່ງກ່າວ ນຳຜົນປະໂຫຍດຕົວຈິງໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາການມາເຂົ້າຮ່ວມຂອງບັນດາຜູ້ແທນຈາກປະເທດຝຣັ່ງໂກໂຟນີ ເຊິ່ງເປັນການປະກອບສ່ວນເຮັດແໜ້ນສາຍພົວພັນມິດຕະພາບ ລະຫວ່າງ ສປປ ລາວ ກັບປະເທດຕ່າງໆ ແລະ ໄດ້ອວຍພອນໃຫ້ກອງປະຊຸມປະສົບຜົນສຳເລັດເປັນຢ່າງດີ.

## ກອງປະຊຸມຄັ້ງທີ I-XI...

(ຕໍ່ຈາກໜ້າ 8)

(7). ກອງປະຊຸມໄດ້ຮັບຮອງ ແລະ ໄດ້ຢືນຢັນ ເຖິງ 5 ຫຼັກການ ແລະ 3 ທິດນຳ ກ່ຽວກັບການສ້າງພັກໃນໄລຍະ ໃໝ່ຄື:

1. ພັກປະຊາຊົນປະຕິວັດລາວ ເອົາບັນດາຫລັກມູນທີ່ມີລັກສະນະທົ່ວໄປ ຂອງລັດທິມາກ-ເລນິນ ເປັນພື້ນຖານແຫ່ງແນວຄິດທິດສະດີຂອງຕົນ, ນອກຈາກນັ້ນ ກໍ່ຮັບເອົາສິ່ງຍອດຍິ່ງທາງດ້ານສະຕິປັນຍາຂອງມວນມະນຸດ, ໝູນໃຊ້ທິດສະດີວິທະຍາສາດ ແລະ ບົດຮຽນຂອງປະເທດຕ່າງໆ ໃຫ້ແທດເໝາະກັບພຶດຕິກຳແລະເງື່ອນໄຂຕົວຈິງຂອງ ປະເທດເຮົາ, ເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ນ້ຳໃຈສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ, ສົມທົບລັດທິຮັກຊາດອັນແທ້ຈິງກັບ ລັດທິສາກົນ ອັນຜ່ອງໃສ;
2. ພັກຈັດຕັ້ງຕາມຫລັກການ ລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບ, ພັກມີລະບຽບວິໄນເຂັ້ມງວດ,
3. ພັກຖືຄວາມສາມັກຄີ ອັນໜຶ່ງອັນດຽວເປັນຫລັກການພື້ນຖານ,
4. ຖືເອົາການຕິຊົມຕົນເອງ ແລະ ຕິຊົມກັນເປັນກົດເກນແຫ່ງການເຄື່ອນໄຫວ ແລະ ຂະຫຍາຍຕົວຂອງຕົນ,
5. ພັກເຄື່ອນໄຫວຕາມແນວທາງມະຫາຊົນ, ອີງໃສ່ມະຫາຊົນ ແລະ ຜ່ານຂະບວນການປະຕິວັດຂອງມະຫາຊົນ ເພື່ອກໍ່ສ້າງ ແລະ ຂະຫຍາຍພັກ. ສົມທົບການກໍ່ສ້າງພັກທັງໃນ 03 ດ້ານ ຄື: ການເມືອງ, ແນວຄິດ ແລະ ການຈັດຕັ້ງ.

**ກອງປະຊຸມໃຫຍ່ຄັ້ງທີVIຂອງພັກ(18-20ມີນາ1996):**

(1). ກອງປະຊຸມໃຫຍ່ ໄຂຂຶ້ນວັນທີ 18-20 ມີນາ 1996, ທີ່ ນະຄອນຫລວງວຽງຈັນ, ມີຜູ້ແທນສົມບູນເຂົ້າຮ່ວມ 381 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກ 78.000 ສະຫາຍ ໃນທົ່ວປະເທດ ແລະ ນອກຈາກນີ້ຍັງມີຄະນະຜູ້ແທນຖືກເຊີນຈາກ ພັກອ້າຍນ້ອງຈຳນວນໜຶ່ງເຂົ້າຮ່ວມນຳ;

(2). ກອງປະຊຸມໄດ້ເລືອກຕັ້ງເອົາສະຫາຍຄຳໄຕສີພັນດອນ ເປັນປະທານຄະນະບໍລິຫານງານສູນກາງພັກ, ມີກົມການເມືອງ 09 ສະຫາຍ, ມີຄະນະບໍລິຫານງານສູນກາງພັກ 49 ສະຫາຍ (ຍິງ 04 ສະຫາຍ);

(3). ເນື້ອໃນສຳຄັນຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກ ແມ່ນໄດ້ສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນຈາກການດຳເນີນພາລະກິດປ່ຽນແປງໃໝ່ ໃນໄລຍະ 10 ປີ ຜ່ານມາ, ເຊິ່ງສາມາດຖອດຖອນໄດ້ 05 ບົດຮຽນ ພື້ນຖານ ຄື:

1. ການເພີ່ມທະວີຄວາມສາມັກຄີເອກະພາບ ໃນທົ່ວພັກທົ່ວປວງຊົນ ຕິດແໜ້ນກັບການເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແມ່ນປັດໄຈຕັດ ສິນຜົນສຳເລັດ ຂອງພາລະກິດປ່ຽນແປງໃໝ່,
2. ອີງໃສ່ປະຊາຊົນ, ເສີມຂະຫຍາຍກຳລັງແຮງອັນມະຫາສານຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອຜົນປະໂຫຍດຂອງປະຊາຊົນ;
3. ຮັບປະກັນສະຖຽນລະພາບ ທາງດ້ານການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ ແມ່ນເງື່ອນໄຂອັນຈຳເປັນ ສຳລັບການປ່ຽນແປງໃໝ່,
4. ເພີ່ມທະວີບົດບາດນຳພາຂອງພັກ ໃນທຸກຂົງເຂດວຽກງານ ແລະ ເຊີດຊູຄວາມສັກສິດແຫ່ງການຄຸ້ມຄອງລັດ ແມ່ນເງື່ອນໄຂຮັບປະກັນໃຫ້ແກ່ການ ປ່ຽນແປງໃໝ່ໃຫ້ດຳເນີນໄປຢ່າງຖືກຕ້ອງຕາມແນວທາງ ແລະ ຈຸດໝາຍຂອງພັກ, ເສີມຂະຫຍາຍກຳລັງແຮງຂອງຊາດ ສົມທົບກັບກຳລັງແຮງຂອງຍຸກສະໄໝ,
5. ຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍເຫຼືອຈາກສາກົນຢ່າງມີຫລັກການ.

(4). ກຳນົດຈຸດໝາຍໃຫຍ່ ໃນໄລຍະປີ 2020 “ສູ້ຊົນເຮັດໃຫ້ປະເທດຊາດຫລຸດພົ້ນອອກຈາກສະພາວະດ້ອຍພັດທະນາ, ເສດຖະກິດ-ສັງຄົມ ມີການພັດທະນາ ແລະ ໄດ້ມີການປ່ຽນແປງໃໝ່ດ້ວຍລະດັບຕ່າງກັບສະພາບປະຈຸບັນ” ຄື:

1. ການຜະລິດກະສິກຳ ແລະອຸດສາຫະກຳ ມີການຂະຫຍາຍຕົວ ແລະ ມີບາງດ້ານທັນສະໄໝ,
2. ຊີວິດການເປັນຢູ່ດ້ານວັດຖຸ ແລະ ວັດທະນະທຳ ເປັນປົກກະຕິ ແລະ ມີຄຸນນະພາບສູງຂຶ້ນ,
3. ພົນລະເມືອງໄດ້ຮັບການສຶກສາ ແລະ ບໍລິການດ້ານສາທາລະນະສຸກ ຢ່າງທົ່ວເຖິງ,
4. ວັດທະນະທຳອັນດີງາມຂອງຊາດ ໄດ້ຮັບການເສີມຂະຫຍາຍຢ່າງອຸດົມຮັ່ງມີ.
5. ວຽກງານສະຫວັດດີການສັງຄົມອັນພື້ນຖານ ມີການຮັບປະກັນ,
6. ມີບຸຄະລາກອນ ແລະ ກຳລັງແຮງງານທີ່ມີຄວາມສາມາດຕອບສະໜອງຄວາມຕ້ອງການພື້ນຖານ ຂອງການພັດທະນາປະເທດ,
7. ສັງຄົມມີຄວາມສະຫງົບສຸກ, ສີວິໄລ ແລະ ຍຸຕິທຳ, ລະບົບການເມືອງ ປະຊາທິປະໄຕ ປະຊາຊົນ ມີພັກເປັນແກນນຳ ມີຄວາມໜັກແໜ້ນ, ເຂັ້ມແຂງ,
8. ມີການພົວພັນຮ່ວມມືອັນກວ້າງຂວາງ ກັບສາກົນ ແລະ ສາມາດເຈືອຈານເຂົ້າກັບທ່າອ່ຽງລວມຂອງຍຸກສະໄໝ.

(5). ກອງປະຊຸມໃຫຍ່ໄດ້ກຳນົດຈຸດໝາຍສຳລັບ 05 ປີຕໍ່ໜ້າ (1996-2000) ຄື:

1. ສູ້ຊົນຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງໃນລະດັບ 8-8,5% ຕໍ່ປີ, ຮອດປີ 2000 ລາຍໄດ້ສະເລ່ຍ ຕາມຫົວຄົນໃຫ້ໄດ້ 500 ໂດລາ,
2. ສ້າງກິດຈະການພື້ນຖານ ຈຳນວນໜຶ່ງໃຫ້ເປັນໜໍ່ແໜງສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂັ້ນຕໍ່ໄປ,
3. ແກ້ໄຂຄວາມອຶດຢາກຂາດເຂີນ ແລະ ຄວາມທຸກຍາກຂອງປະຊາຊົນ ໃນບໍລິເວນຈຸດສຸມຈຳນວນໜຶ່ງ ດ້ວຍການ ພັດທະນາຊົນນະບົດຮອບດ້ານ.

(6). ກອງປະຊຸມໃຫຍ່ໄດ້ກຳນົດທິດທາງໜ້າທີ່ລວມຄື:

1. ເພີ່ມທະວີຄວາມສາມັກຄີເປັນເອກະພາບ ພາຍໃນພັກ ແລະ ໃນທົ່ວປວງຊົນ, ຮັບປະກັນສະຖຽນລະພາບ ແລະ ຄວາມສະຫງົບ ໃຫ້ໄດ້ຢ່າງໜັກແໜ້ນ, ສ້າງເງື່ອນໄຂອັນເອື້ອອຳນວຍສຳລັບການທຳມາຫາກິນຂອງປະຊາຊົນ ແລະ ການສ້າງສາພັດທະນາປະເທດຊາດ,
2. ປົກປັກຮັກສາ ເອກະລາດ ແລະ ອະທິປະໄຕ ຂອງຊາດໄວ້ຢ່າງໝັ້ນຄົງ,
3. ລະດົມກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະ

ອ່ານຕໍ່ສະບັບໜ້າ



## ສຸຂະພາບ ຫ່າງໄກໂຣຄາ

# ວິທີສັງເກດອາການເນື້ອງອກໃນຮັງໄຂ່

# ຄັດໂດຍ: ທິວກະທິ



ເນື້ອງອກໃນຮັງໄຂ່ໂຣກໃກ້ຕົວທີ່ແມ່ຍິງອາດບໍ່ໄດ້ສັງເກດ ແຕ່ຮູ້ບໍ່ວ່າມີຄວາມສ່ຽງທີ່ຈະກາຍເປັນມະເຮັງຮັງໄຂ່ໄດ້ ຫາກເນື້ອງອກນັ້ນກາຍເປັນເນື້ອຮ້າຍ!

ຖ້າແມ່ຍິງຄົນໃດຢູ່ໆກໍຮູ້ສຶກວ່າທ້ອງໃຫຍ່ຂຶ້ນ ໃນເມື່ອຕົນເອງກໍບໍ່ແມ່ນຄົນຕຸ້ຍໜ້າທ້ອງຫຼາຍ ຫຼືກຳລັງຖືພາ ປະຈຳເດືອນກໍມາຜິດປົກກະຕິ, ປວດຖ່າຍເບົາເລື້ອຍໆ, ຖ່າຍຍາກເປັນປະຈຳ ແລະເມື່ອເວລາຄຳເບິ່ງທີ່ທ້ອງກໍຮູ້ສຶກວ່າເປັນກ້ອນໆ ຫາກມີແບບນີ້ຕ້ອງຟ້າວໄປໂຮງໝໍດ່ວນ ຢ່າປະປ່ອຍ ເພາະຖ້າມັນແມ່ນເນື້ອງອກກໍຈະໄດ້ປິ່ນປົວທັນທີ.

**ວິທີສັງເກດອາການເນື້ອງອກໃນຮັງໄຂ່**

ເມື່ອເວລາເນື້ອງອກຍັງມີຂະໜາດນ້ອຍຢູ່ນັ້ນ ກໍຈະບໍ່ມັກສະແດງອາການໃດໆອອກມາໃຫ້ຮູ້ ແຕ່ເມື່ອມັນໃຫຍ່ຂຶ້ນ ຜູ້ທີ່ເປັນຈະມີອາການດັ່ງນີ້:

- ຮູ້ສຶກປວດທ້ອງນ້ອຍ;
- ມີຄວາມຜິດປົກກະຕິຂອງປະຈຳເດືອນ ອາດຈະມາບໍ່ຖືກມື້ ຫຼື ບໍ່ມາ ຫຼື ມາຫຼາຍເກີນໄປ ມາໜ້ອຍເກີນໄປ;
- ທ້ອງໃຫຍ່ ຫຼື ບວມຂຶ້ນ ແລະ ຮູ້ສຶກອຶດອັດແໜ້ນທ້ອງ;
- ຄຳເບິ່ງທ້ອງແລ້ວພົບເປັນກ້ອນໆ;
- ທ້ອງອືດ ແລະ ມີອາການປວດຮາກ;
- ຫາກກ້ອນນັ້ນໄປກົດທັບກະເພາະປັດສະວະ ກໍຈະມີອາການປວດຖ່າຍເບົາເລື້ອຍໆ;
- ຫາກກ້ອນເນື້ອງອກໄປກົດບຽດລຳໄສ້ ຈະມີອາການທ້ອງອືດຖ່າຍຍາກ;
- ຫາກກ້ອນເນື້ອງອກມີຂະໜາດໃຫຍ່ຫຼາຍ ຫຼື ເກີດພາວະແຊກຊ້ອນທີ່ຮຽກວ່າ"ພາວະຮັງໄຂ່ບິດຕົວ" ຈະຮູ້ສຶກປວດທ້ອງກັບມີໄຂ້ ຮັງໄຂ່ອາດຈະແຕກອອກຈົນເກີດການຕົກເລືອດ ແລະ ຕິດເຊື້ອໄດ້.

ຖ້າຫາກວ່າ ກ້ອນເນື້ອງອກນັ້ນເປັນກ້ອນເນື້ອຮ້າຍ ຫຼື ມະເຮັງຮັງໄຂ່ ອາການທີ່ສະແດງອອກມາຈະເຫັນໄດ້ຊັດເຈນກວ່າກ້ອນເນື້ອທຳມະດາ ຫຼື ອາດມີອາການເບື່ອອາຫານ, ນ້ຳໜັກຫຼຸດ, ມີພາວະທ້ອງມານ ຫຼື ມີນ້ຳໃນຊ່ອງທ້ອງເຊິ່ງຈຳເປັນຕ້ອງໄດ້ຮັບການປິ່ນປົວ ເພື່ອປ້ອງກັນເນື້ອຮ້າຍລຸກລາມ.

**ຂໍ້ມູນຈາກ:**
**www.laopost.com**





## ອາດ ກະວີລາວ

# ຫອມກິ່ນຈຳປາ

**# ອາຈານບົວຄຳ**

❊ ຫອມເດ ດວງດອກໄມ້ ໃນມິ່ງເມືອງລາວ
ຈຳປາຂາວແສນງາມ ຢູ່ນາຜືນກວ້າງ
ສາຍລົມລວງຕີຕ້ອງ ອາຍລະອອງໄປທົ່ວ
ແດນດົງດອນບ່ອນບ້ານ ສະຖານແຄວ້ນຖິ່ນເນົາ

❊ ດູດັ່ງດາວເດັ່ນຟ້າ ພາຮຸ່ງເຮືອງແສງ
ຍາມລົງແລງອອນຊອນ ບ່າວສາວລຳກ້ຽວ
ຫຼຽວລ່ຳມອງຜົມເກົ້າ ຊຸມສາວເໜັບດອກ
ບອກວ່າງາມເລີດລ້ຳ ຈຳປາບານສຽບເກົ້າ ສາວລາວຍິ້ມຊື່ນໃຈ ແທ້ນາ!

❊ ລຽບເລາະຕາມຮົ້ວ ນາໄຮ່ໃນສວນ
ມວນແມງບິນຕອມຕາມ ດອກຈີຈອມຈຸ້ມ
ຕະລຸມດູດເອົານ້ຳ ເກສອນຫອມອ່ອນ
ໂຮຍພື້ນແຜ່ນທະລັງ ງາມເດ!

❊ ຍາມສິງການເພິ່ນເອ້ ດວງດອກຫຼາຍສີສັນ
ງານສຳຄັນບາສີ ສູ່ຂວັນຂານເອີ້ນ
ເພິ່ນເອົາຈຳປາຄ້ອງ ບູຊາງານຍິ່ງ
ລ່ຳຫຼິງອາດເອ້ ຊົມແລ້ວຊື່ນໃຈ

❊ ຍາມເມື່ອໄກຫ່າງບ້ານ ຖານຖິ່ນເຄີຍອາໄສ
ໃຈຄະນຶງຫວນຫາ ທົ່ງນາແດນກວ້າງ
ສາຍລົມລ່ວງພານຕ້ອງ ລະອອງຫອມດອມກິ່ນ
ຄິດເຖິງດິນຖິ່ນບ້ານ ສະຖານເບື້ອງບ່ອນເນົາ ແທ້ນາ!



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ກອງ**ປະຊຸມສະໄໝວິສາມັນ**ເທື່ອທີ 2** ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ **17 ມີນານີ້** ທີ່ຫໍປະຊຸມສະພາແຫ່ງຊາດ ແລະ ຈະດຳເນີນໄປຈົນເຖິງວັນທີ **20 ມີນາ** ໂດຍຈະມີການພິຈາລະນາ ແລະ ຮັບຮອງເອົາ **5 ບັນຫາ**ສຳຄັນຄື ບັນຫາໜຶ່ງນັ້ນ ວຽກງານລັດຖະບານ ບັນຫາທີສອງ ຮັບຮອງລັດຖະທຳມະນູນໃຊ້ ບັນຫາສາມ ແລະ ສີ່ນັ້ນ ຂອງກົດໝາຍປັບປຸງໃໝ່ ບັນຫາເລື່ອງທ້າຍ ນະໂຍບາຍພິເສດແດ່ຜູ້ ພັດທະນາແທ້ແກ່ຊາດປະຊາ **ນັ້ນແລ້ວ!**

❊ **ຂະ**ບວນການສະເຫຼີມສະຫຼອງ**ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ** ຄົບຮອບ **70 ປີ** ພວມຄຶກຄື້ນ ຫຼາຍຂະແໜງການ ເຜີຍແຜ່ຜົນສຳເລັດຕະຫຼອດການນຳພາຂອງພັກຕາມໜ້າສື່ຕ່າງໆ ພັກສະຫຼາດລື້ນລົ້ນ ທາໃສປຽບບໍ່ປຸນປານ ທັງອາດຫານຊານໄຊ ຊື່ສຽງດັງກ້ອງ ປະຊາລາວຍໍຍ້ອງ ພັກນຳພາສະຫຼາດເກັ່ງ ເປັນຄັນທຸງຮົ່ມກົ້ງ ນຳໜ້າເພື່ອປະຊາ **ນັ້ນແລ້ວ!**

## ຊວນຍິ້ມ

*# ແອ່ນຕຸ້ງ*

### ເລື່ອງ: ດວງດາວ

ຜົວ-ເມຍຄູ່ໜຶ່ງນັ່ງຢອກລ້ັກັນຢູ່ລະບຽງ, ຜູ້ເປັນເມຍເລີຍຖາມຂຶ້ນມາວ່າ:

**ເມຍ:** ຜົວເອີຍ ຖ້າປຽບທຽບ ຊິປຽບນ້ອງເປັນຫຍັງໃນໂລກນີ້?

**ຜົວ:** ໂດຍ... ເມຍ ປຽບສະເໝືອນດວງດາວພຸ້ນແຫຼວ

**ເມຍ:** ອຸ້ຍ... (ຍິ້ມແບບເຂີນອາຍ ພ້ອມເຮັດຕາຫວານໃສ່) ເປັນຫຍັງເດເນາະ?

**ຜົວ:** ເພາະເບິ່ງໄດ້ແຕ່ສະເພາະກາງຄືນ

**ເມຍ:** ອ້າວ!... ອ້າຍ



## ຄະຕິເຕືອນໃຈ

*#ດອກຫຍ້າ*

"ທຸກສິ່ງປ່ຽນໄດ້ຕະຫຼອດເວລາ
ທຸກຢ່າງພັດທະນາໄດ້ສະເໝີ"

ລັດຖະສະພາຕ່າງປະເທດ

# ສະພານິຕິບັນຍັດແຫ່ງຊາດຈີນ ຜ່ານຮ່າງກົດໝາຍ 24 ສະບັບໃນປີຜ່ານມາ




(Xinhua) - ວັນອັງຄານທີ 4 ມີນາຜ່ານມາ, ໂຫຼ ສິນຈ້ຽນ (Lou Qinjian) ໂຄສົກກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ກ່າວວ່າ: ໃນປີທີ່ຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ຮັບຮອງເອົາຮ່າງກົດໝາຍ 24 ສະບັບ ນັບແຕ່ກອງປະຊຸມປະຈຳປີຂອງ NPC ປີ 2024, ໃນນັ້ນ ສ້າງໃໝ່ 6 ສະບັບ, ປັບປຸງ 14 ສະບັບ, ແລະ ຕົກລົງ 4 ບັນຫາກ່ຽວກັບບັນຫາສຳຄັນທາງດ້ານກົດໝາຍ ແລະບັນຫາສຳຄັນພື້ນຖານຂອງປະເທດຊາດ.

ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ໄດ້ຮັບຮອງເອົາເມື່ອບໍ່ດົນມານີ້ ແນໃສ່ປັບປຸງລະບົບພາສີເພື່ອສົ່ງເສີມການພັດທະນາທີ່ມີຄຸນນະພາບສູງ, ຄວາມຍຸຕິທຳທາງສັງຄົມ ແລະ ຕະຫຼາດທີ່ເປັນເອກະພາບ (unified market). ທ່ານ ໂຫຼ ກ່າວແລະກ່າວຕື່ມວ່າກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍວ່າດ້ວຍສະຖິຕິ ໄດ້ຮັບການປັບປຸງເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງເສດຖະກິດຕະຫຼາດ ແລະ ປົກປ້ອງຜົນປະໂຫຍດສາທາລະນະໃຫ້ຫຼາຍຂຶ້ນ.

ຄະນະປະຈຳ NPC ໄດ້ສ້າງກົດໝາຍວ່າດ້ວຍພາສີ ເພື່ອສົ່ງເສີມການຄ້າຕ່າງປະເທດແລະຊຸກຍູ້ການເປີດປະຕູການຄ້າທີ່ມີມາດຕະຖານສູງ. ທ່ານ ໂຫຼ ກ່າວ ແລະ ເສີມວ່າ ນອກຈາກນີ້, ກົດໝາຍວ່າດ້ວຍການຕ້ານການຟອກເງິນ ຍັງໄດ້ຮັບການປັບປຸງ ເພື່ອປັບປຸງລະບົບການປ້ອງກັນ ແລະ ຄວບຄຸມຄວາມສ່ຽງດ້ານການເງິນລະດັບຊາດໃຫ້ດີຂຶ້ນ.

# ພັກການເມືອງໃນ Mozambique ລົງນາມຂໍ້ຕົກລົງຢຸດຕິວິກິດຫຼັງການເລືອກຕັ້ງ




(Xinhua) - ດານຽວ ຊາໂປ (Daniel Chapo) ປະທານາທິບໍດີໂມຊຳບິກແລະບັນດາພັກການເມືອງຕົ້ນຕໍຂອງປະເທດ ໄດ້ລົງນາມໃນຂໍ້ຕົກລົງທີ່ລະບຸເງື່ອນໄຂເພື່ອປະຕິຮູບລັດ, ເຊິ່ງເປັນສ່ວນໜຶ່ງຂອງການເຈລະຈາທາງການເມືອງ ທີ່ມີຈຸດປະສົງແນໃສ່ແກ້ໄຂວິກິດການຫຼັງການເລືອກຕັ້ງ.

ຂໍ້ຕົກລົງດັ່ງກ່າວໄດ້ລົງນາມເມື່ອວັນພຸດທີ 5 ມີນາຜ່ານມາທີ່ນະຄອນຫຼວງມາປູໂຕ ໂດຍບັນດາພັກການເມືອງທີ່ມີທີ່ນັ່ງໃນສະພາແຫ່ງຊາດ ປະກອບມີແນວໂຮມປົດປ່ອຍໂມຊຳບິກ (FRELIMO) ເຊິ່ງເປັນລັດຖະບານພັກດຽວ, ພັກຜູ້ທີ່ເບິ່ງໂລກໃນແງ່ດີເພື່ອການພັດທະນາໂມຊຳບິກ (PODEMOS), ການຕໍ່ຕ້ານແຫ່ງຊາດໂມຊຳບິກ (RENAMO) ແລະ ຂະບວນການປະຊາທິປະໄຕແຫ່ງໂມຊຳບິກ (MDM), ພ້ອມດ້ວຍກຸ່ມການເມືອງນອກສະພາແຫ່ງຊາດອີກ 5 ກຸ່ມ.

ຊາໂປກ່າວວ່າ: ການລົງນາມຂໍ້ຕົກລົງດັ່ງກ່າວ ສະທ້ອນໃຫ້ເຫັນເຖິງຄວາມເຊື່ອໝັ້ນຂອງພັກການເມືອງຕ່າງໆທີ່ມີຕໍ່ຄວາມເປັນກາງຂອງລັດຖະບານ ແລະ ຄວາມສາມາດໃນການສົ່ງເສີມສະຖຽນລະພາບທາງການເມືອງ, ເສດຖະກິດ ແລະ ສັງຄົມ. ທ່ານກ່າວຕື່ມວ່າ "ຄຳໝັ້ນສັນຍານີ້ແມ່ນບາດກ້າວສຳຄັນທີ່ສຸດໃນການຮັກສາສັນຕິພາບ ແລະການລວມປະຊາທິປະໄຕທີ່ເປັນໜຶ່ງຢູ່ພາກພື້ນອາຟຣິກາຕອນໃຕ້, ເຊິ່ງເປັນເຫດຜົນທີ່ພວກເຮົາຮູ້ສຶກເປັນກຽດທີ່ມີຜູ້ຕາງໜ້າຈາກລັດຖະບານຂອງຊິມບັບເວ ແລະ ປະທານາທິບໍດີຕັງຊານີເຂົ້າຮ່ວມ".

ອັລບີໂນ ຟໍຄວິລຮາ (Albino Forquilha) ຫົວໜ້າພັກ PODEMOS ເຊິ່ງເປັນພັກຝ່າຍຄ້ານຕົ້ນຕໍ ກ່າວຄຳເຫັນໃນນາມຂອງຝ່າຍຄ້ານທັງ 8 ພັກທີ່ລົງນາມໃນຂໍ້ຕົກລົງດັ່ງກ່າວວ່າ: ຄຳໝັ້ນສັນຍານີ້ ຈະເປີດທາງໄປສູ່ກາລະໂອກາດໃໝ່ໆໃນໂມຊຳບິກ. ທ່ານກ່າວວ່າ "ການສ້າງຄວາມເຫັນດີເຫັນພ້ອມລະຫວ່າງບັນດາພັກທີ່ລົງນາມ ແມ່ນກຸນແຈສຳຄັນໃນການແກ້ໄຂບັນຫາຕ່າງໆທີ່ເປັນສູນກາງຂອງຄວາມບໍ່ໝັ້ນຄົງທາງການເມືອງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມຂອງປະເທດ ທີ່ເກີດຂຶ້ນຊ້ຳແລ້ວຊ້ຳອີກ".

"ມີການກຳນົດເງື່ອນໄຂເພື່ອໃຫ້ຜູ້ມີບົດບາດທາງການເມືອງທີ່ແຕກຕ່າງກັນ, ສະຖາບັນ ແລະສັງຄົມຕ່າງໆ ເຂົ້າຮ່ວມໃນການສົນທະນາທີ່ສຳຄັນນີ້ ເພື່ອສ້າງໂມຊຳບິກທີ່ສາມັກຄີໃນຄວາມຫຼາກຫຼາຍ" ຟໍຄວິລຮາກ່າວເສີມແລະຍັງເນັ້ນວ່າ, ຄວາມບໍ່ໝັ້ນຄົງທາງການເມືອງ ຕ້ອງບໍ່ກາຍເປັນມາດຕະຖານ.

ສະພາແຫ່ງຊາດສາທາລະນະລັດໂມຊຳບິກ ອາຍຸການ 5 ປີ, ມີທັງໝົດ 250 ທີ່ນັ່ງ ໃນນີ້, FRELIMO 171 ທີ່ນັ່ງ, PODEMOS 43 ທີ່ນັ່ງ, RENAMO 28 ທີ່ນັ່ງ ແລະ MDM 8 ທີ່ນັ່ງ.

# ລັດຖະບານ Czech ສະເໜີກົດໝາຍການອົບພະຍົບທີ່ເຂັ້ມງວດຂຶ້ນ

(Xinhua) - ວັນສຸກທີ 7 ມີນາຜ່ານມາ, ລັດຖະບານສາທາລະນະລັດເຊັກ ປະກາດວ່າຈະສະເໜີຮ່າງກົດໝາຍເພື່ອປັບປຸງລະບຽບການກວດຄົນເຂົ້າເມືອງ ແລະ ເພີ່ມທະວີຄວາມໝັ້ນຄົງແຫ່ງຊາດ.



ນາຍົກລັດຖະມົນຕີ (ທີ 2 ຈາກຊ້າຍ) ແລະ ລັດຖະມົນຕີກະຊວງພາຍໃນ (ຂວາ) ຖະແຫຼງຂ່າວກ່ຽວກັບບັນດາບາດກ້າວໃນປັດຈຸບັນ ເພື່ອຮັດແໜ້ນນະໂຍບາຍອົບພະຍົບຂອງເຊັກ, 07/3/2025

ນາຍົກລັດຖະມົນຕີ ເປເຕີ ຟີອາລາ (Petr Fiala) ກ່າວໃນການຖະແຫຼງຂ່າວວ່າ ຂໍ້ສະເໜີນີ້ ມີຈຸດປະສົງເພື່ອເລັ່ງລັດການເນລະເທດບຸກຄົນທີ່ອາໄສຢູ່ຢ່າງຜິດກົດໝາຍ, ຂະຫຍາຍການກວດຢ່າງລະອຽດຕໍ່ບຸກຄົນຂໍສະຖານະຜູ້ລີ້ໄພ ແລະ ຜູ້ອົບພະຍົບ, ແລະ ຫຼຸດມາດຕະຖານທາງສັງຄົມທີ່ຕ່ຳກວ່າສຳລັບຜູ້ຍື່ນຂໍສະຖານະຜູ້ລີ້ໄພ. ທ່ານ ຟີອາລາ ເນັ້ນໜັກວ່າ, ການປະຕິຮູບດັ່ງກ່າວ ມີເຈດຕະນາເພື່ອຄວບຄຸມການເຄື່ອນຍ້າຍຖິ່ນຖານແບບບໍ່ຖືກຕ້ອງຕາມລະບຽບການ, ໃນຂະນະທີ່ຍັງຮັກສາຫຼັກການການເຄື່ອນຍ້າຍຢ່າງເສລີຂອງເຂດເຊງເກັນ (Schengen) ໄວ້ດ້ວຍ.

ຕາມຂໍ້ມູນຂອງສຳນັກງານຕຳຫຼວດຕ່າງປະເທດ, ເຈົ້າໜ້າທີ່ເຊັກ ໄດ້ກັກຕົວບຸກຄົນທີ່ກ່ຽວຂ້ອງກັບການອົບພະຍົບເຂົ້າເມືອງຢ່າງຜິດກົດໝາຍ 9,461 ຄົນໃນປີ 2024, ຫຼຸດລົງ 31.9% ເມື່ອທຽບໃສ່ປີກ່ອນໜ້າ; ໃນປີ 2022 ມີຜູ້ອົບພະຍົບເຂົ້າເມືອງຜິດກົດໝາຍເກືອບ 30 ພັນຄົນຖືກຈັບກຸມ.

ເຖິງແມ່ນຕຳຫຼວດໃຫ້ເຫດຜົນວ່າ ການຫຼຸດລົງແມ່ນຍ້ອນມາດຕະການຮັກສາຄວາມປອດໄພທີ່ມີຢູ່ແລ້ວ ແລະ ການຮ່ວມມືລະຫວ່າງປະເທດ, ແຕ່ລັດຖະບານເຫັນວ່າ ກົດໝາຍສະບັບນີ້ ເປັນບາດກ້າວບຸກທະລຸເພື່ອແກ້ໄຂສິ່ງທ້າທາຍໃນອະນາຄົດ.

ກົດໝາຍດັ່ງກ່າວ ຍັງລວມເຖິງການກຳນົດສະຖານທີ່ກັກຂັງຢູ່ສະໜາມບິນສາກົນເພື່ອເພີ່ມຄວາມປອດໄພຢູ່ຊາຍແດນອີກດ້ວຍ. ພາຍໃຕ້ຂໍ້ສະເໜີນີ້, ຜູ້ຂໍລີ້ໄພທີ່ບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ຫຼື ໃຊ້ລະບົບການອົບພະຍົບໃນທາງທີ່ຜິດ ອາດຕ້ອງປະເຊີນກັບຂໍ້ຈຳກັດໃນການເຄື່ອນໄຫວພາຍໃນປະເທດ.

ກະຊວງພາຍໃນກ່າວວ່າ ຮ່າງກົດໝາຍສະບັບປັບປຸງນີ້ ຈະຖືກຍື່ນໃຫ້ສະພາຜູ້ແທນປະຊາຊົນ, ສະພາຕ່ຳຂອງລັດຖະສະພາ, ໃນຖານະເປັນຄວາມຄິດລິເລີ່ມຂອງລັດຖະສະພາ ໂດຍຮຽກຮ້ອງໃຫ້ມີການອະນຸມັດໂດຍໄວ.

# ປະທານາທິບໍດີໂປໂລຍ ສະເໜີປັບປຸງລັດຖະທຳມະນູນເພື່ອຮັບປະກັນການໃຊ້ຈ່າຍດ້ານປ້ອງກັນປະເທດ



ອັນເດຣຈ ດູດາ (ຊ້າຍ) ແລະ ມາກ ຣຸດເຕ (ຂວາ)

(Xinhua) - ວັນສຸກທີ 7 ມີນາຜ່ານມາ, ປະທານາທິບໍດີໂປໂລຍອັນເດຣຈດູດາ (Andrzej Duda) ໄດ້ຍື່ນຂໍ້ສະເໜີປັບປຸງລັດຖະທຳມະນູນຕໍ່ປະທານສະພາຕ່ຳ ໂດຍຕັ້ງເປົ້າໝາຍທີ່ຈະກຳນົດເງິນລາຍຈ່າຍດ້ານການປ້ອງກັນປະເທດຢ່າງໜ້ອຍ 4% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

ຫຼັງຈາກການພົບປະກັບປະທານສະພາຕ່ຳຊີມອນ ໂຮໂລເນຍ (Szymon Holownia), ດູດາ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຮັບປະກັນທາງດ້ານກົດໝາຍ ເພື່ອຮັບປະກັນວ່າບັນດານະໂຍບາຍຄວາມໝັ້ນຄົງຂອງປະເທດ ຍັງຄົງສອດຄ່ອງກັນ ບໍ່ວ່າຈະມີການປ່ຽນແປງທາງການເມືອງຫຼືບໍ່ກໍຕາມ.

"ສິ່ງສຳຄັນທີ່ສຸດຄືການສ້າງຄວາມເຂັ້ມແຂງດ້ານຄວາມໝັ້ນຄົງຂອງພວກເຮົາຢ່າງຕໍ່ເນື່ອງ; ເນື່ອງຈາກຂະນະນີ້ພວກເຮົາມີຄວາມເຫັນດີເຫັນພ້ອມທາງການເມືອງກ່ຽວກັບບັນຫານີ້, ຂ້າພະເຈົ້າເຊື່ອວ່າຕ້ອງມີການສ້າງຄວາມເຂັ້ມແຂງດ້ານກົດໝາຍດ້ວຍ" ເຂົາກ່າວພ້ອມທັງຢ້ຳຄືນວ່າ: ທຸກຄວາມພະຍາຍາມທີ່ຈະຕັດການໃຊ້ຈ່າຍນີ້, ຈະຕ້ອງໄດ້ຮັບສຽງສ່ວນຫຼາຍສອງສ່ວນສາມໃນສະພາຕ່ຳ, ເຊິ່ງຈະເຮັດໃຫ້ມີພຽງແຕ່ຄວາມເຫັນດີເຫັນພ້ອມທາງການເມືອງຢ່າງກວ້າງຂວາງເທົ່ານັ້ນ ທີ່ຈະສາມາດປ່ຽນແປງນະໂຍບາຍດ້ານປ້ອງກັນປະເທດຂອງໂປໂລຍໄດ້.

ດູດາ ສະແດງຄວາມຫວັງວ່າ ການປັບປຸງລັດຖະທຳມະນູນ ຈະໄດ້ຮັບການຮັບຮອງຈາກລັດຖະສະພາໂດຍໄວໂດຍເນັ້ນໜັກເຖິງຄວາມຮີບດ່ວນໃນການຮັກສາພັນທະກຳລະນີການປ້ອງກັນປະເທດຂອງໂປໂລຍ ທ່າມກາງຄວາມບໍ່ແນ່ນອນຂອງໂລກໃນປັດຈຸບັນ.

ດູດາ ກ່າວໃນການຖະແຫຼງຂ່າວຮ່ວມກັບເລຂາທິການໃຫຍ່ NATO ມາກ ຣຸດເຕ (Mark Rutte) ທີ່ນະຄອນຫຼວງບຣຸກແຊນ, ປະເທດແບນຊິກເມື່ອວັນພະຫັດທີ 6 ມີນາ ວ່າ ປະເທດ NATO ທັງໝົດຄວນເພີ່ມລາຍຈ່າຍດ້ານການປ້ອງກັນປະເທດໃຫ້ເປັນຢ່າງໜ້ອຍ 3% ຂອງ GDP ໂດຍທັນທີ.

ອີງຕາມງົບປະມານຂອງລັດຖະບານໂປໂລຍ, ການໃຊ້ຈ່າຍດ້ານການປ້ອງກັນປະເທດຂອງປະເທດ ຈະບັນລຸເຖິງ 4.7% GDP ໃນປີ 2025.

**ເຝົ້າໄວ້ ໄດ້ບົດຮຽນ**

❖ ວິເສດ ສະແຫວງສຶກສາ

# ເບິ່ງລະດັບໂທດ ທີ່ວາງໃສ່ຜູ້ສໍ້ລາດບັງຫຼວງ

ໃນບົດປະຈຳວັນນີ້ ຜູ້ຂຽນໄດ້ສັນຫາມາເລົ່າກ່ຽວກັບ**ການລົງໂທດຕໍ່ຜູ້ຕິດແຮ້ວຄະດີສໍ້ລາດບັງຫຼວງຢູ່ປະເທດອິນເດຍແລະຫວຽດນາມ.** ສຳລັບເລື່ອງທີ່ເກີດຂຶ້ນຢູ່**ອິນເດຍ**ນັ້ນ ໄດ້ແກະມາຈາກໜັງສືພິມວຽງຈັນທາມ (Vientiane Times) ສະບັບວັນທີ 4 ທັນວາ 2019 ທີ່ພາດຫົວຂໍ້ວ່າ: “ການສໍ້ລາດບັງຫຼວງໂດຍເຈົ້າໜ້າທີ່ຕຳຫຼວດໃນນະຄອນຫຼວງນິວເດລີ ໄດ້ເພີ່ມຂຶ້ນຢ່າງວ່ອງໄວ” ລາຍລະອຽດຂອງຂ່າວບອກວ່າ ໜ່ວຍງານສຳຫຼວດບັນຫາສໍ້ລາດບັງຫຼວງຂອງອິນເດຍ ໄດ້ສະຫຼຸບການເຄື່ອນໄຫວພາຍໃນປີ 2019 ວ່າ ບັນຫາສໍ້ລາດບັງຫຼວງນັ້ນ ທີ່ເກີດຂຶ້ນໃນໝູ່ເຈົ້າໜ້າທີ່ຕຳຫຼວດປະຈຳນະຄອນຫຼວງນິວເດລີ ໄດ້ເພີ່ມຂຶ້ນຢ່າງວ່ອງໄວ ຈາກ 13% ໃນປີ 2018 ເປັນ 33% ໃນປີ 2019 ແຕ່ພ້ອມດຽວກັນນັ້ນ, ການສໍ້ລາດບັງຫຼວງໃນຂະແໜງຈົດທະບຽນຊັບສິນແລະທີ່ດິນພັດຫຼຸດລົງຈາກ46% ເປັນ 26% ໃນໄລຍະຜ່ານມາ ການສໍ້ລາດບັງຫຼວງໃນຂະແໜງດັ່ງກ່າວນັ້ນ ຢູ່ໃນລະດັບສູງເລື້ອຍໆມາ.

ການສຳຫຼວດຍັງຊີ້ບອກວ່າ46%ຂອງຊາວນະຄອນຫຼວງນິວເດລີ ຖືກສຳພາດນັ້ນບອກວ່າ ໄດ້ໃຫ້ສິນບົນເຈົ້າໜ້າທີ່ເພື່ອໃຫ້ໄດ້ການບໍລິການ; ໃນຈຳນວນດັ່ງກ່າວ 25% ບອກວ່າໄດ້ໃຫ້ສິນບົນພະນັກງານຫຼາຍເທື່ອ, 21% ບອກວ່າໄດ້ໃຫ້ສິນບົນ 1-2 ຄັ້ງ ແລະມີພຽງ 19% ບອກວ່າ ຕົນໄດ້ຮັບການບໍລິການໂດຍບໍ່ໄດ້ໃຫ້ສິນບົນຈັກດີ້. ໃນປີ 2018 ອົງການປົກຄອງນະຄອນຫຼວງ ໄດ້ສຳຫຼວດກ່ຽວກັບການໃຫ້ບໍລິການເຖິງທີ່ຈຳນວນ100 ປະເພດ (ແມ່ນການບໍລິການທີ່ເຈົ້າໜ້າທີ່ເອົາໄປໃຫ້ເປົ້າໝາຍຮອດເຮືອນ) ວ່າມີການໃຫ້ສິນບົນລະດັບໃດ; ຜົນອອກມາກໍຄື 26% ບອກວ່າໄດ້ໃຫ້ສິນບົນຄ່າບໍລິການລົງທະບຽນຊັບສິນ ແລະ ທີ່ດິນ ໃນນັ້ນ 21% ໃຫ້ສິນບົນພາກສ່ວນເຈົ້າໜ້າທີ່ນະຄອນຫຼວງ, 33% ໃຫ້ສິນບົນເຈົ້າໜ້າທີ່ຕຳຫຼວດ, 20% ໃຫ້ສິນບົນພະນັກງານຂະແໜງຕ່າງໆ.

**ຫວຽດນາມ,** ຂ່າວໜັງສືພິມລາວພັດທະນາ ສະບັບວັນທີ 5 ທັນວາ 2018 ໃຫ້ຮູ້ວ່າ ທາງການຫວຽດນາມ ໄດ້ເປີດບໍລິການລະບົບໂທລະສັບສາຍດ່ວນ ເພື່ອໃຫ້ປະຊາຊົນສາມາດຮ້ອງຮຽນກ່ຽວກັບພຶດຕິກຳທຸດຈະລິດຂອງເຈົ້າໜ້າທີ່ຕຳຫຼວດ; ການເປີດບໍລິການໂທລະສັບສາຍດ່ວນ ມີຂຶ້ນພາຍຫຼັງໄດ້ມີຂະບວນການກວາດລ້າງບັນດາເຈົ້າໜ້າທີ່ຕຳຫຼວດທີ່ວໃສໃຈຄິດຮັບສິນບົນ ຈຳນວນ 10 ກວ່າຄົນ ໃນນັ້ນ, ມີຕຳຫຼວດຍົດໃຫຍ່ 2 ຄົນ ຖືກຕັດສິນຈຳຄຸກເປັນເວລາ 10 ປີ ຍ້ອນຂໍ້ຫາຮ່ວມຫົວກັບແກ໊ງພະນັນອອນລາຍໃຕ້ດິນ. ແນວໃດກໍດີ, ການຮ້ອງຮຽນຜ່ານລະບົບໂທລະສັບສາຍດ່ວນກ່ຽວກັບພຶດຕິກຳທຸດຈະລິດຂອງເຈົ້າໜ້າທີ່ຕຳຫຼວດນັ້ນ ຜູ້ແຈ້ງຕ້ອງບອກຊື່, ນາມສະກຸນ, ທີ່ຢູ່ ແລະ ເບີໂທລະສັບຂອງຕົນຄັກແນ່ ບໍ່ຊັ້ນການຮ້ອງຮຽນຈະບໍ່ໄດ້ຮັບການພິຈາລະນາ; ຜູ້ຮ້ອງຮຽນທີ່ດູໝິ່ນ-ປະໝາດ ເຈົ້າໜ້າທີ່ຕຳຫຼວດໃນຂະນະປະຕິບັດງານນັ້ນ ກໍຈະບໍ່ໄດ້ຮັບການພິຈາລະນາເຊັ່ນກັນ.

ຂ່າວໃຫ້ຮູ້ຕື່ມວ່າ, ທາງການຫວຽດນາມເຄີຍເປີດໃຫ້ບໍລິການລະບົບໂທລະສັບສາຍດ່ວນກ່ຽວກັບພຶດຕິກຳບໍ່ດີຂອງເຈົ້າໜ້າທີ່ຕຳຫຼວດມາແລ້ວ ແຕ່ເນັ້ນສະເພາະຕຳຫຼວດຈະລາຈອນ, ສ່ວນລະບົບທີ່ກາຍເປັນຂ່າວຢູ່ນີ້ກວມເອົາເຈົ້າໜ້າທີ່ຕຳຫຼວດທົ່ວໄປທັງໝົດ.







# ສອງໃນໜຶ່ງ

*# ບ່າວກະບື*

**ແມ່**ຍິງຄົນໜຶ່ງກັບລູກສາວນ້ອຍ ພວມຢ້ຽມບ່ອນຝັງສົບຂອງພໍ່ເຖົ້າຂອງເດັກ ເຊິ່ງເປັນນັກກະວີທີ່ມີຊື່ສຽງຄົນໜຶ່ງ.ຕອນຍ່າງຜ່ານປ່າຊ້າໄປຫາລົດ,ລູກສາວນ້ອຍຖາມຂຶ້ນວ່າ: “ອີ່ແມ່... ໃນຂຸມໜຶ່ງ ສາມາດຝັງຄົນໄດ້ຮອດສອງຄົນພຸ້ນບໍ່?”

“ບໍ່... ບໍ່ໄດ້ດອກລູກ” ແມ່ຕອບ, “ເປັນຫຍັງລູກຈຶ່ງຖາມ?”

“ເອົາແລ້ວ... ຢູ່ຂຸມຝັງສົບພໍ່ເຖົ້າຫັ້ນຂຽນວ່າ ***ທີ່ນີ້ແມ່ນສົບຂອງນັກກະວີ ແລະ ນັກຕໍ່ສູ້***”.

# Two in One

*# BAOKBU*

A woman and her little girl were visiting the grave of the little girl's grandfather-a famous poet. On their way through the cemetery back to the car, the little girl asked. “Mommy, do they ever bury two people in the same grave?”

“Of corse not, dear. ”replied the mother.

“Why would you think that?”

“The grandfather's tombstone back there says: *'Here lies a poet and a fighter'*”.




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊີ້ນຳວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ